# ທະນາຄານ ເມແບັງ ສາຂາລາວ

ເອກະສານລາຍງານການເງິນ

ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2020

# ທະນາຄານ ເມແບັງ ສາຂາລາວ

## ສາລະບານ

*ໜ້າ*


| | |
|---|---|
| ຂໍ້ມູນທົ່ວໄປ | 1 |
| ບົດລາຍງານຂອງຄະນະບໍລິຫານ | 2 |
| ບົດລາຍງານຂອງນັກກວດສອບອິດສະຫຼະ | 3 - 5 |
| ໃບລາຍງານຜົນການດຳເນີນງານ | 6 - 7 |
| ໃບລາຍງານຖານະການເງິນ | 8 - 10 |
| ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ | 11 |
| ໃບລາຍງານກະແສເງິນສົດ | 12 - 13 |
| ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ | 14 - 39 |

# ທະນາຄານ ເມແບັງ ສາຂາລາວ

ຂໍ້ມູນທົ່ວໄປ

**ສາຂາ**

ທະນາຄານ ເມແບັງ ສາຂາລາວ ("ສາຂາ") ແມ່ນສາຂາ ທີ່ໄດ້ສ້າງຕັ້ງໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("ສປປ ລາວ") ຂອງ ທະນາຄານ ມາເລຍັນ ເບີຫັດ, ທະນາຄານທີ່ຈົດທະບຽນໃນປະເທດມາເລເຊຍ. ສາຂາໄດ້ດຳເນີນງານພາຍໃຕ້ໃບອະນຸຍາດດຳເນີນທຸລະກິດເລກທີ 35/ທຫລ ອອກໃຫ້ໂດຍທະນາຄານແຫ່ງ ສປປ ລາວ ("ທຫລ") ໃນວັນທີ 26 ຕຸລາ 2012 ແລະ ໃບອະນຸຍາດດຳເນີນທຸລະກິດສະບັບປັບປຸງຄັ້ງທີສອງ ເລກທີ 18/ທຫລ ລົງວັນທີ 19 ພະຈິກ 2018.

ຕາມການເປີດສາຂາໃນວັນທີ 1 ມັງກອນ 2020 ສາຂາດັ່ງກ່າວໄດ້ຮັບທຸກຊັບສິນ ແລ ໜີ້ສິນ ຕາມການອະນຸມັດຈາກ ທະນາຄານ ເມແບັງ ສາຂາ ໜອງຄ້ວງ ເຊິ່ງໄດ້ຮັບອະນຸມັດຈາກ ທະນາຄານ ແຫ່ງ ສປປ ລາວ ("ທຫລ").

ທຶນຈົດທະບຽນໃນເບື້ອງຕົ້ນຂອງສາຂາແມ່ນ 100,661,400,000 ກີບ. ເງິນທຶນຈົດທະບຽນທີ່ຖອກແລ້ວຕົວຈິງ ນະວັນທີ 31 ທັນວາ 2020 ແມ່ນ 200,783,128 ກີບ (31 ທັນວາ 2019: 100,661,400,000ກີບ).

ກິດຈະກຳຕົ້ນຕໍຂອງສາຂາແມ່ນ ສະໜອງທຸກການບໍລິການດ້ານການທະນາຄານ ແລະ ການບໍລິການດ້ານການເງິນທີ່ກ່ຽວຂ້ອງໃນ ສປປ ລາວ.

ສາຂາຕັ້ງຢູ່ບ້ານເລກທີ 43, 45, 47 ຖະໜົນ ລ້ານຊ້າງ, ບ້ານ ຫັດສະດີໃຕ້, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ.

**ຄະນະບໍລິຫານ**

ສະມາຊິກຂອງຄະນະບໍລິຫານພາຍໃນປີ ແລະ ນະມື້ອອກບົດລາຍງານສະບັບນີ້ປະກອບດ້ວຍ:

| *ຊື່* | *ຕຳແໜ່ງ* | *ວັນທີແຕ່ງຕັ້ງ* |
|---|---|---|
| ທ່ານ Tan Tee Huat | ຜູ້ອຳນວຍການໃຫຍ່ | ແຕ່ງຕັ້ງວັນທີ 12 ມີນາ 2019 |
| ທ່ານ ນາງ ແພງສົມຈິດ ພົນໂພສີ | ຮອງຜູ້ອຳນວຍການໃຫຍ່ | ແຕ່ງຕັ້ງວັນທີ 1 ມັງກອນ 2020 |
| ທ່ານ ນາງ ອຳໄພວັນ ເມືອງທານ | ຫົວໜ້າພະແນກບໍລິການ | ແຕ່ງຕັ້ງວັນທີ 1 ເມສາ 2018 |
| ທ່ານ ສົດທິພົນ ສີສຸດາຈັນ | ຫົວໜ້າພະແນກການເງິນ | ແຕ່ງຕັ້ງວັນທີ 28 ພຶດສະພາ 2018 |
| ທ່ານ ເພັດທະນູສອນ ໄຊຍະຣາດ | ຫົວໜ້າພະແນກພັດທະນາທຸລະກິດ | ແຕ່ງຕັ້ງວັນທີ 1 ພະຈິກ 2018 |
| ທ່ານ ແກ້ວໃຈ ໄມຍະວົງສີ | ຫົວໜ້າພະແນກສິນເຊື່ອ | ແຕ່ງຕັ້ງວັນທີ 1 ມັງກອນ 2017 |

**ຕົວແທນທາງດ້ານກົດໝາຍ**

ຕົວແທນທາງດ້ານກົດໝາຍຂອງສາຂາ ນັບຕັ້ງແຕ່ວັນທີ 12 ມີນາ 2019 ນະມື້ອອກບົດລາຍງານສະບັບນີ້ແມ່ນ ທ່ານ Tan Tee Huat - ຜູ້ອຳນວຍການໃຫຍ່.

**ຜູ້ກວດສອບ**

ຜູ້ກວດສອບບັນຊີຂອງສາຂາແມ່ນ ບໍລິສັດ ເອີນແອນຢັງ ລາວ ຈຳກັດ.

## ທະນາຄານ ເມແບັງ ສາຂາລາວ

ບົດລາຍງານຂອງຄະນະບໍລິຫານ

ຄະນະບໍລິຫານຂອງທະນາຄານ ເມແບັງ ສາຂາລາວ ("ສາຂາ") ມີຄວາມຍິນດີໃນການນຳສະເໜີບົດລາຍງານສະບັບນີ້ ແລະ ເອກະສານລາຍງານການເງິນຂອງສາຂາ ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2020.

**ຄວາມຮັບຜິດຊອບຂອງຄະນະບໍລິຫານຕໍ່ເອກະສານລາຍງານການເງິນ**

ຄະນະບໍລິຫານຂອງສາຂາ ມີໜ້າທີ່ຮັບຜິດຊອບຕໍ່ການກະກຽມເອກະສານລາຍງານການເງິນຂອງແຕ່ລະປີການບັນຊີທີ່ສະແດງໃຫ້ເຫັນຄວາມຖືກຕ້ອງຕາມຄວາມເປັນຈິງຂອງຖານະທາງການເງິນຂອງສາຂາ ແລະ ຜົນປະກອບການ ແລະ ກະແສເງິນສົດພາຍໃນປີ. ໃນການກະກຽມ ແລະ ນຳສະເໜີເອກະສານລາຍງານການເງິນດັ່ງກ່າວ, ຄະນະບໍລິຫານຕ້ອງປະຕິບັດດັ່ງນີ້:

- ເລືອກເຟັ້ນນະໂຍບາຍດ້ານການບັນຊີທີ່ເໝາະສົມ ແລະ ຈັດຕັ້ງປະຕິບັດຢ່າງສະໝໍ່າສະເໝີ;
- ພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ຮອບຄອບ;
- ຖະແຫຼງການວ່າບັນດາມາດຕະຖານການບັນຊີທີ່ກ່ຽວຂ້ອງໄດ້ຖືກປະຕິບັດ, ທຸກຂໍ້ຂັດແຍ່ງ ຫຼື ຂໍ້ແຕກຕ່າງທີ່ສຳຄັນຕໍ່ການປະຕິບັດຕໍ່ມາດຕະຖານການບັນຊີຕ້ອງຖືກນຳມາເປີດເຜີຍ ແລະ ອະທິບາຍຢູ່ໃນເອກະສານລາຍງານການເງິນ; ແລະ
- ກະກຽມເອກະສານລາຍງານການເງິນບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ, ຍົກເວັ້ນແຕ່ທາງສາຂາຫາກຕັ້ງຂໍ້ສົມມຸດຕິຖານ ຫຼື ຄາດຄະເນວ່າສາຂາບໍ່ສາມາດທີ່ຈະດຳເນີນທຸລະກິດຕໍ່ໄປໄດ້.

ຄະນະບໍລິຫານ ມີໜ້າທີ່ຮັບປະກັນວ່າ ການບັນທຶກບັນຊີໄດ້ຖືກປະຕິບັດຢ່າງຖືກຕ້ອງເຊິ່ງໄດ້ເປີດເຜີຍຖານະການເງິນຂອງສາຂາຢ່າງເໝາະສົມໃນທຸກເວລາ ແລະ ຮັບປະກັນວ່າການບັນທຶກບັນຊີແມ່ນສອດຄ່ອງກັບລະບົບການບັນຊີທີ່ໄດ້ນຳໃຊ້. ນອກຈາກນັ້ນ, ຄະນະບໍລິຫານຍັງຕ້ອງຮັບຜິດຊອບຕໍ່ການຮັກສາຊັບສົມບັດຄົງທີ່ຂອງສາຂາ ແລະ ຮັບປະກັນວ່າສາຂາມີຂັ້ນຕອນການກວດສອບທີ່ເໝາະສົມ ເພື່ອປ້ອງກັນ ແລະ ຊອກຫາການສໍ້ໂກງ ຫຼື ສິ່ງທີ່ຜິດປົກກະຕິອື່ນໆ.

ຄະນະບໍລິຫານໄດ້ຢັ້ງຢືນວ່າ ສາຂາໄດ້ປະຕິບັດຕາມເງື່ອນໄຂຂ້າງເທິງໃນການກະກຽມເອກະສານລາຍງານການເງິນທີ່ກ່ຽວຂ້ອງ.

**ຖະແຫຼງການຂອງຄະນະບໍລິຫານ**

ຄະນະບໍລິຫານມີຄວາມຍິນດີຖະແຫຼງວ່າ ເອກະສານລາຍງານການເງິນໄດ້ຖືກກະກຽມຢ່າງຖືກຕ້ອງຕາມຄວາມເປັນຈິງ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍການບັນຊີຂອງ ສປປ ລາວ ແລະ ບັນດາລະບຽບການທີ່ວາງອອກໂດຍທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ.

ຕາງໜ້າ ແລະ ໃນນາມຄະນະບໍລິຫານ:

ທ່ານ. Tan Tee Huat
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

29 ເມສາ 2021

**EY**
**Building a better working world**

Ernst & Young Lao Co., Ltd
6th floor, Kolao Tower I, 23 Singha Road
Nongbone Village, Saysettha District
Vientiane Capital, Lao P.D.R.

Tel: +856 21 455 077
Fax: +856 21 455 078
ey.com

ເລກທີອ້າງອີງ: 61042000/22193338-LAS

# ບົດລາຍງານຂອງນັກກວດສອບອິດສະຫຼະ

**ຮຽນ: ຄະນະບໍລິຫານຂອງ ທະນາຄານ ເມແບັງ ສາຂາລາວ**

### *ຄໍາເຫັນ*

ພວກຂ້າພະເຈົ້າໄດ້ດໍາເນີນການກວດສອບເອກະສານລາຍງານການເງິນຂອງທະນາຄານ ເມແບັງ ສາຂາລາວ ("ສາຂາ"), ເຊິ່ງປະກອບດ້ວຍໃບລາຍງານຖານະການເງິນນະວັນທີ 31 ທັນວາ 2020, ໃບລາຍງານຜົນການດໍາເນີນງານ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ໃບລາຍງານກະແສເງິນສົດ ສໍາລັບປີທີ່ສິ້ນສຸດວັນທີດັ່ງກ່າວ, ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ, ທີ່ປະກອບດ້ວຍບົດສະຫຼຸບຂອງບັນດານະໂຍບາຍທາງບັນຊີທີ່ສໍາຄັນ.

ໃນຄໍາເຫັນຂອງພວກຂ້າພະເຈົ້າ, ເອກະສານລາຍງານການເງິນຂອງສາຂາໄດ້ຖືກກະກຽມຢ່າງຖືກຕ້ອງໂດຍສອດຄ່ອງກັບກົດໝາຍບັນຊີແຫ່ງ ສປປ ລາວ ແລະ ບັນດາລະບຽບການຕ່າງໆທີ່ໄດ້ວາງອອກໂດຍ ທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນໍາສະເໜີເອກະສານລາຍງານການເງິນ.

### *ພື້ນຖານການອອກຄໍາເຫັນ*

ພວກຂ້າພະເຈົ້າໄດ້ດໍາເນີນການກວດສອບໂດຍສອດຄ່ອງກັບມາດຕະຖານດ້ານການກວດສອບສາກົນ (ISA). ບັນດາຄວາມຮັບຜິດຊອບຂອງພວກຂ້າພະເຈົ້າທີ່ກໍານົດໄວ້ພາຍໃຕ້ບັນດາມາດຕະຖານເຫຼົ່ານັ້ນໄດ້ຖືກອະທິບາຍເພີ່ມເຕີມໃນວັກ *"ຄວາມຮັບຜິດຊອບຂອງນັກກວດສອບໃນການກວດສອບເອກະສານລາຍງານການເງິນ"* ຂອງບົດລາຍງານຂອງພວກຂ້າພະເຈົ້າ. ພວກຂ້າພະເຈົ້າແມ່ນມີຄວາມເປັນເອກະລາດຈາກສາຂາໂດຍສອດຄ່ອງກັບກົດຈັນຍາບັນທາງບັນຊີສໍາລັບນັກວິຊາຊີບບັນຊີຂອງສະພາມາດຕະຖານສາກົນດ້ານຈັນຍາບັນ (IESBA Code) ແລະ ບັນດາຂໍ້ກໍານົດທາງດ້ານຈັນຍາບັນທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນຂອງພວກຂ້າພະເຈົ້າໃນ ສປປ ລາວ ແລະ ພວກຂ້າພະເຈົ້າຍັງໄດ້ປະຕິບັດບັນດາຄວາມຮັບຜິດຊອບທາງດ້ານຈັນຍາບັນອື່ນໆໂດຍສອດຄ່ອງກັບກົດຈັນຍາບັນທາງບັນຊີສໍາລັບນັກວິຊາຊີບບັນຊີຂອງສະພາມາດຕະຖານສາກົນດ້ານຈັນຍາບັນ. ພວກຂ້າພະເຈົ້າເຊື່ອວ່າຫຼັກຖານການກວດສອບທີ່ພວກຂ້າພະເຈົ້າໄດ້ຮັບແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານໃຫ້ແກ່ການອອກຄໍາເຫັນຂອງພວກຂ້າພະເຈົ້າ.

### *ບັນຫາທີ່ຄວນເອົາໃຈໃສ່ – ພື້ນຖານການບັນຊີ*

ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ຕໍ່ບົດອະທິບາຍເລກທີ 2 ຂອງເອກະສານລາຍງານການເງິນ ທີ່ໄດ້ອະທິບາຍພື້ນຖານຂອງການບັນຊີທີ່ໄດ້ຖືກນໍາໃຊ້ໂດຍສາຂາ. ບັນດານະໂຍບາຍການບັນຊີເຫຼົ່ານີ້ແມ່ນບໍ່ໄດ້ມີຈຸດປະສົງທີ່ຈະນໍາສະເໜີຖານະທາງການເງິນ, ຜົນການດໍາເນີນງານ ແລະ ກະແສເງິນສົດຂອງສາຂາ ໂດຍສອດຄ່ອງກັບຫຼັກການບັນຊີສາກົນທີ່ຍອມຮັບໂດຍທົ່ວໄປ. ຄໍາເຫັນຂອງພວກຂ້າພະເຈົ້າແມ່ນບໍ່ໄດ້ສະແດງຄໍາເຫັນແບບມີເງື່ອນໄຂຕໍ່ກັບບັນຫານີ້.



A member firm of Ernst & Young Global Limited

*ຄວາມຮັບຜິດຊອບຂອງຄະນະບໍລິຫານສາຂາຕໍ່ເອກະສານລາຍງານການເງິນ*

ຄະນະບໍລິຫານສາຂາ ແມ່ນມີຄວາມຮັບຜິດຊອບໃນການກະກຽມ ແລະ ນຳສະເໜີເອກະສານລາຍງານການເງິນໂດຍສອດຄ່ອງກັບກົດໝາຍວ່າດ້ວຍການບັນຊີແຫ່ງ ສປປ ລາວ ແລະ ບັນດາລະບຽບການອື່ນໆ ທີ່ວາງອອກໂດຍທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງໃນການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ ແລະ ສຳລັບບັນດາການຄວບຄຸມພາຍໃນທີ່ກ່ຽວຂ້ອງທີ່ທາງຄະນະບໍລິຫານ ເຫັນວ່າມີຄວາມຈຳເປັນໃນການກະກຽມເອກະສານລາຍງານການເງິນໃຫ້ມີຄວາມຖືກຕ້ອງຕາມຄວາມເປັນຈິງ ແລະ ປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ທີ່ອາດຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດຕ່າງໆ.

ໃນການກະກຽມເອກະສານລາຍງານການເງິນ, ຄະນະບໍລິຫານ ມີຄວາມຮັບຜິດຊອບໃນການປະເມີນຄວາມອາດສາມາດຂອງສາຂາ ໃນການສືບເນື່ອງໃນການດຳເນີນທຸລະກິດ, ການເປີດເຜີຍຖ້າເໝາະສົມ, ບັນຫາທີ່ກ່ຽວຂ້ອງກັບການສືບເນື່ອງໃນການດຳເນີນທຸລະກິດ ແລະ ນຳໃຊ້ພື້ນຖານການບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດຈົນກວ່າທີ່ທາງຄະນະບໍລິຫານສາຂາ ຫາກເຫັນວ່າທຸລະກິດບໍ່ມີຄວາມອາດສາມາດໃນການດຳເນີນງານຕໍ່ໄດ້ ຫຼື ໃນກໍລະນີທີ່ທາງຄະນະບໍລິຫານສາຂາມີຈຸດປະສົງຢາກຍຸບເລີກ ຫຼື ຢຸດກິດຈະການ.

*ຄວາມຮັບຜິດຊອບຂອງນັກກວດສອບໃນການກວດສອບເອກະສານລາຍງານການເງິນ*

ຈຸດປະສົງໃນການກວດສອບຂອງພວກຂ້າພະເຈົ້າ ແມ່ນເພື່ອຮັບປະກັນການຮັບປະກັນທີ່ສົມເຫດສົມຜົນວ່າເອກະສານລາຍງານການເງິນໂດຍພາບລວມແມ່ນປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ, ແລະ ເພື່ອການອອກບົດລາຍງານຂອງນັກກວດສອບອິດສະຫຼະທີ່ປະກອບມີຄຳເຫັນຂອງພວກຂ້າພະເຈົ້າ. ການຮັບປະກັນທີ່ສົມເຫດສົມຜົນແມ່ນການຮັບປະກັນໃນລະດັບສູງແຕ່ບໍ່ໄດ້ຮັບປະກັນວ່າການກວດສອບທີ່ໄດ້ດຳເນີນໂດຍສອດຄ່ອງກັບມາດຕະຖານສາກົນດ້ານການກວດສອບຈະສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ອາດເກີດຂຶ້ນໄດ້ຕະຫຼອດທັງໝົດ. ຂໍ້ຜິດພາດສາມາດເກີດຂຶ້ນຈາກການສໍ້ໂກງ ຫຼື ຂໍ້ຜິດພາດຕ່າງໆ ແມ່ນຖືກພິຈາລະນາວ່າສຳຄັນຈາກລາຍການດຽວ ຫຼື ຫຼາຍລາຍການລວມກັນ, ເຊິ່ງສາມາດຄາດຄະເນວ່າ ແລະ ມີອິດທິພົນຕໍ່ການຕັດສິນໃຈທາງເສດຖະກິດຂອງຜູ້ນຳໃຊ້ພື້ນຖານຂອງເອກະສານລາຍງານການເງິນສະບັບນີ້.

ໃນການກວດສອບໂດຍສອດຄ່ອງກັບມາດຕະຖານສາກົນດ້ານການກວດສອບ, ພວກຂ້າພະເຈົ້າໄດ້ໃຊ້ການຕັດສິນ ແລະ ວິນິໄສແບບມືອາຊີບໃນຕະຫຼອດການດຳເນີນການກວດສອບ. ພວກຂ້າພະເຈົ້າຍັງໄດ້:

- ກຳນົດ ແລະ ປະເມີນບັນດາຄວາມສ່ຽງຂອງຂໍ້ຜິດພາດອັນໃຫຍ່ຫຼວງຂອງເອກະສານລາຍງານການເງິນ ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ, ອອກແບບ ແລະ ດຳເນີນຂັ້ນຕອນການກວດສອບເພື່ອຮອງຮັບບັນດາຄວາມສ່ຽງເຫຼົ່ານັ້ນ ແລະ ເພື່ອຮັບປະກັນວ່າຈະໄດ້ຮັບເອົາຫຼັກຖານການກວດສອບທີ່ພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ. ຄວາມສ່ຽງຂອງການບໍ່ສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ມີຜົນມາຈາກການສໍ້ໂກງແມ່ນສູງກວ່າຜົນທີ່ມາຈາກຄວາມຜິດພາດ, ເນື່ອງຈາກວ່າການສໍ້ໂກງອາດລວມມີການສົມຮູ້ຮ່ວມຄິດ, ການປອມແປງ, ການລະເລີຍໂດຍຕັ້ງໃຈ, ການບິດເບື່ອນຫຼືລະເມີດຫຼັກການການຄວບຄຸມພາຍໃນ.
- ທຳຄວາມເຂົ້າໃຈກ່ຽວກັບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບເພື່ອອອກແບບຂັ້ນຕອນການກວດສອບທີ່ເໝາະສົມກັບສະພາບການຕ່າງໆແຕ່ບໍ່ໄດ້ມີຈຸດປະສົງເພື່ອສະແດງຄຳເຫັນກ່ຽວກັບປະສິດທິພາບຂອງການຄວບຄຸມພາຍໃນຂອງສາຂາ.
- ປະເມີນຄວາມເໝາະສົມຂອງບັນດານະໂຍບາຍທາງບັນຊີທີ່ນຳໃຊ້ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງການບັນຊີ ແລະ ການເປີດເຜີຍທີ່ກ່ຽວຂ້ອງທີ່ໄດ້ຖືກນຳໃຊ້ໂດຍຄະນະບໍລິຫານ.



A member firm of Ernst & Young Global Limited

EY

Building a better working world

- ສະຫຼຸບກ່ຽວກັບຄວາມເໝາະສົມຂອງການນໍາໃຊ້ພື້ນຖານຂອງບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດໍາເນີນທຸລະກິດຂອງຄະນະບໍລິຫານ ໂດຍອີງຕາມຫຼັກຖານການກວດສອບທີ່ໄດ້ຮັບ ບໍ່ວ່າຈະເປັນຄວາມບໍ່ແນ່ນອນທີ່ສໍາຄັນທີ່ອາດເກີດຂຶ້ນຈາກບັນດາເຫດການ ຫຼື ເງື່ອນໄຂທີ່ອາດເປັນຂໍ້ສົງໃສທີ່ສໍາຄັນກ່ຽວກັບຄວາມອາດສາມາດຂອງສາຂາ ໃນການສືບເນື່ອງໃນການດໍາເນີນທຸລະກິດ. ຖ້າຫາກພວກຂ້າພະເຈົ້າສະຫຼຸບໄດ້ວ່າມີຄວາມບໍ່ແນ່ນອນທີ່ສໍາຄັນເກີດຂຶ້ນ, ພວກຂ້າພະເຈົ້າຈະໄດ້ລະບຸໃນບົດລາຍງານຂອງນັກກວດສອບອິດສະຫຼະ ໃນການເປີດເຜີຍທີ່ກ່ຽວຂ້ອງໃນເອກະສານລາຍງານການເງິນເພື່ອສະເໜີໃຫ້ເອົາໃຈໃສ່ຕື່ມອີກ ຫຼື ຖ້າຫາກຂາດການເປີດເຜີຍທີ່ພຽງພໍ, ພວກຂ້າພະເຈົ້າຈະຕ້ອງໄດ້ສະແດງຄໍາເຫັນແບບມີເງື່ອນໄຂ. ການສະຫຼຸບຂອງພວກຂ້າພະເຈົ້າແມ່ນອີງຕາມຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີຂອງບົດລາຍງານຂອງນັກກວດສອບອິດສະຫຼະ. ເຖິງຢ່າງໃດກໍຕາມ, ບັນດາເຫດການໃນອານະຄົດ ຫຼື ເງື່ອນໄຂອື່ນໆ ອາດເປັນສາເຫດເຮັດໃຫ້ສາຂາຍຸດຕິການສືບຕໍ່ຄວາມສືບເນື່ອງໃນການດໍາເນີນທຸລະກິດ.

ພວກຂ້າພະເຈົ້າໄດ້ປຶກສາຫາລືກັບຄະນະບໍລິຫານຂອງສາຂາກ່ຽວກັບບັນດາບັນຫາອື່ນໆ, ການວາງແຜນຂອບເຂດ ແລະ ເວລາຂອງການກວດສອບ ແລະ ຂໍ້ຄົ້ນພົບທາງການກວດສອບທີ່ສໍາຄັນປະກອບມີບັນດາຂໍ້ບົກຜ່ອງທີ່ສໍາຄັນໃດໆໃນການຄວບຄຸມພາຍໃນທີ່ພວກຂ້າພະເຈົ້າໄດ້ກໍານົດໃນລະຫວ່າງການກວດສອບຂອງພວກຂ້າພະເຈົ້າ.

**ບໍລິສັດ ເອີນແອນຢັງ ລາວ ຈໍາກັດ**

ບໍລິສັດ ເອີນ ແອນ ຢັງ ລາວ ຈໍາກັດ ERNST & YOUNG LAO CO.,LTD

Anh Hoang Trinh
ຮຸ້ນສ່ວນ

ໃບທະບຽນຮັບຮອງການກວດສອບ
ເລກທີ 011/LCPAA-APT-2018

ນະຄອນຫຼວງວຽງຈັນ, ສປປ ລາວ

29 ເມສາ 2021



A member firm of Ernst & Young Global Limited

## ທະນາຄານ ເມແບັງ ສາຂາລາວ

ໃບລາຍງານຜົນການດໍາເນີນງານ
ສໍາລັບປີທີ່ສິ້ນສຸດວັນທີ 31 ທັນວາ 2020

| *ລໍາດັບ* | *ລາຍການ* | *ບົດອະທິບາຍ ເລກທີ* | *2020 ພັນກີບ* | *2019 ພັນກີບ* |
|---|---|---|---|---|
| **A.** | ລາຍຮັບ ແລະ ລາຍຈ່າຍຈາກການດໍາເນີນງານ | | | |
| **1.** | ລາຍຮັບດອກເບ້ຍ ແລະ ຄ້າຍຄືດອກເບ້ຍ | **3** | **14,101,353** | **13,703,677** |
| **2.** | ລາຍຈ່າຍດອກເບ້ຍ ແລະ ຄ້າຍຄືດອກເບ້ຍ | **3** | **(6,677,391)** | **(7,820,056)** |
| **I.** | ລາຍຮັບສຸດທິຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍ | | **7,423,962** | **5,883,621** |
| **3** | ລາຍຮັບຄ່າທໍານຽມ ແລະ ຄ່ານາຍໜ້າ | **4** | **590,184** | **1,084,221** |
| **4** | ລາຍຈ່າຍຄ່າທໍານຽມ ແລະ ຄ່ານາຍໜ້າ | **4** | **(135,893)** | **(104,061)** |
| **5** | ກໍາໄລສຸດທິຈາກການຊື້ຂາຍເງິນຕາຕ່າງປະເທດ | | **1,361,829** | **1,126,171** |
| **II.** | ລາຍຮັບສຸດທິຈາກການດໍາເນີນງານ | | **9,240,082** | **7,989,952** |
| **B** | ລາຍຮັບ ແລະ ລາຍຈ່າຍອື່ນໆ | | | |
| **6** | ລາຍຮັບຈາກການດໍາເນີນງານອື່ນໆ | **5** | **1,157,910** | **497,327** |
| **7** | ລາຍຈ່າຍບໍລິຫານ | | **(8,322,107)** | **(7,741,643)** |
| 7.1 | ເງິນເດືອນ ແລະ ຄ່າໃຊ້ຈ່າຍອື່ນໆໃຫ້ແກ່ພະນັກງານ | 6 | (5,191,919) | (4,731,778) |
| 7.2 | ລາຍຈ່າຍບໍລິຫານອື່ນໆ | 7 | (3,130,188) | (3,009,865) |
| **8** | ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມ | | **(1,967,799)** | **(2,409,788)** |
| **9** | ລາຍຈ່າຍອື່ນໆຈາກການດໍາເນີນງານ | **8** | **(183,156)** | **(194,641)** |

ທະນາຄານ ເມແບັງ ສາຂາລາວ

ໃບລາຍງານຜົນການດຳເນີນງານ (ຕໍ່)
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2020

| *ລຳດັບ* | *ລາຍການ* | *ບົດອະທິບາຍ ເລກທີ* | *2020 ພັນກີບ* | *2019 ພັນກີບ* |
|---|---|---|---|---|
| **10** | ຫັກເງິນແຮສຸດທິສຳລັບເງິນກູ້ | **12.2** | **(3,337,620)** | **(6,044,002)** |
| **III.** | ລວມຂາດທຶນກ່ອນອາກອນ | | **(3,412,690)** | **(7,902,795)** |
| **11** | ອາກອນກຳໄລພາຍໃນປີ | **17.3** | **-** | **-** |
| **IV.** | ຂາດທຶນຫຼັງຫັກອາກອນ | | **(3,412,690)** | **(7,902,795)** |

ກະກຽມໂດຍ:

ທ່ານ ສິດທິຜົນ ສີສຸດາຈັນ
ຫົວໜ້າພະແນກການເງິນ

ອະນຸມັດໂດຍ:

ທ່ານ Tan Tee Huat
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

29 ເມສາ 2021

ທະນາຄານ ເມແບັງ ສາຂາລາວ

ໃບລາຍງານຖານະການເງິນ
ນະວັນທີ 31 ທັນວາ 2020

| *ລຳດັບ* | *ຊັບສິນ* | *ບົດອະທິບາຍ ເລກທີ* | *31/12/2020 ພັນກີບ* | *31/12/2019 ພັນກີບ* |
|---|---|---|---|---|
| **I** | **ເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ ("ທຫລ")** | | **135,927,913** | **161,658,850** |
| 1 | ເງິນສົດໃນຄັງ | 9 | 5,428,646 | 2,965,707 |
| 2 | ເງິນຝາກຢູ່ ທຫລ | 10 | 130,499,267 | 158,693,143 |
| **II** | **ເງິນຝາກຢູ່ທະນາຄານອື່ນ** | | **209,155,540** | **154,000,840** |
| 1 | ເງິນຝາກກະແສລາຍວັນ | 11.1 | 138,688,340 | 65,400,840 |
| 2 | ເງິນຝາກມີກຳນົດ | 11.2 | 70,467,200 | 88,600,000 |
| **III** | **ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ, ຫລັງຫັກເງິນແຮສະເພາະສຳລັບກິດຈະກຳສິນເຊື່ອສຸດທິ** | **12** | **156,027,760** | **138,045,438** |
| **IV** | **ຊັບສົມບັດຄົງທີ່** | | **11,103,135** | **8,966,479** |
| 1 | ຊັບສົມບັດຄົງທີ່ມີຕົວຕົນ | 13.1 | 1,515,204 | 2,249,813 |
| 2 | ຊັບສົມບັດຄົງທີ່ບໍ່ມີຕົວຕົນ | 13.2 | 129,413 | 74,011 |
| 3 | ຊັບສົມບັດຄົງທີ່ພວມກໍ່ສ້າງ | 13.3 | 755,288 | 179,048 |
| 4 | ສິດນຳໃຊ້ຊັບສິນ | 13.4 | 8,703,230 | 6,463,607 |
| **V** | **ຊັບສິນອື່ນໆ** | | **6,684,807** | **4,904,467** |
| 1 | ໜີ້ຕ້ອງຮັບດອກເບ້ຍຄ້າງຮັບ | | 2,255,023 | 460,751 |
| 2 | ຊັບສິນອື່ນໆ | 14 | 4,429,784 | 4,443,716 |
| | **ລວມຊັບສິນ** | | **518,899,155** | **467,576,074** |

ທະນາຄານ ເມແບັງ ສາຂາລາວ

ໃບລາຍງານຖານະການເງິນ (ຕໍ່)
ນະວັນທີ 31 ທັນວາ 2020

| *ລຳດັບ* | *ໜີ້ສິນ ແລະ ທຶນ* | *ບົດອະທິບາຍ ເລກທີ* | *31/12/2020 ພັນກີບ* | *31/12/2019 ພັນກີບ* |
|---|---|---|---|---|
| **I** | **ໜີ້ຕ້ອງສົ່ງທະນາຄານ** | | **136,691,772** | **164,836,367** |
| 1 | ເງິນຝາກກະແສລາຍວັນ | 15.1 | 135,704,472 | 149,042,367 |
| 2 | ເງິນຝາກມີກຳນົດ | 15.2 | 987,300 | 15,794,000 |
| **II** | **ໜີ້ຕ້ອງສົ່ງໃຫ້ລູກຄ້າ** | **16** | **198,920,952** | **199,295,204** |
| 1 | ເງິນຝາກກະແສລາຍວັນ | | 22,774,829 | 23,182,741 |
| 2 | ເງິນຝາກປະຢັດ | | 27,303,180 | 19,009,546 |
| 3 | ເງິນຝາກມີກຳນົດ | | 148,710,671 | 154,003,164 |
| 4 | ໜີ້ຕ້ອງສົ່ງລູກຄ້າອື່ນໆ | | 132,272 | 3,099,753 |
| **III** | **ໜີ້ສິນອື່ນໆ** | | **13,851,084** | **7,499,109** |
| 1 | ໜີ້ຕ້ອງສົ່ງດອກເບ້ຍຄ້າງຈ່າຍ | | 5,604,880 | 2,440,291 |
| 2 | ໜີ້ຕ້ອງສົ່ງອາກອນ | 17.1 | 44,914 | 2,969 |
| 3 | ໜີ້ຕ້ອງສົ່ງອື່ນໆ | 18 | 8,201,290 | 5,055,849 |
| | **ລວມໜີ້ສິນ** | | **349,463,808** | **371,630,680** |
| **IV** | **ທຶນຕົນເອງ ແລະ ຄັງສຳຮອງ** | | | |
| 1 | ທຶນຈົດທະບຽນທີ່ຖອກແລ້ວ | 19 | 200,783,129 | 100,661,400 |
| 2 | ຄັງແຮຕາມລະບຽບການ | | 5,633,965 | 5,633,965 |
| 3 | ເງິນແຮທົ່ວໄປສຳລັບກິດຈະກຳສິນເຊື່ອ | 12.2 | 768,821 | 677,735 |
| 4 | ກຳໄລລໍຖ້າປັນຜົນ | | (37,750,568) | (11,027,706) |
| | **ລວມທຶນ** | | **169,435,347** | **95,945,394** |
| | **ລວມໜີ້ສິນ ແລະ ທຶນ** | | **518,899,155** | **467,576,074** |

ທະນາຄານ ເມແບັງ ສາຂາລາວ

ໃບລາຍງານຖານະການເງິນ (ຕໍ່)
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2020

| *ລຳດັບ* | *ລາຍການນອກໃບລາຍງານຖານະການເງິນ* | *31/12/2020 ພັນກີບ* | *31/12/2019 ພັນກີບ* |
|---|---|---|---|
| **I** | **ຄຳໝັ້ນສັນຍາທີ່ໄດ້ໃຫ້** | | |
| 1 | ຄຳໝັ້ນສັນຍາສະໜອງທຶນໃຫ້ກັບລູກຄ້າ | 5,425,553 | 12,739,912 |
| | **ລວມຄຳໝັ້ນສັນຍາທີ່ໄດ້ໃຫ້** | **5,425,553** | **12,739,912** |
| **II** | **ຫຼັກຊັບຄ້ຳປະກັນ ແລະ ຊວດຈຳ** | | |
| **A** | **ຫຼັກຊັບຄ້ຳປະກັນ ແລະ ຊວດຈຳສຳລັບເງິນກູ້** | **617,187,075** | **589,762,455** |
| 1 | ຫຼັກຊັບຄ້ຳປະກັນ ແລະ ຊວດຈຳສຳລັບເງິນກູ້ໃຫ້ແກ່ລູກຄ້າ | 617,187,075 | 589,762,455 |
| **B** | **ຫຼັກຊັບຄ້ຳປະກັນ ແລະ ການມັດຈຳສຳລັບໜັງສືຄ້ຳປະກັນ** | **5,425,553** | **12,739,912** |
| 1 | ຫຼັກຊັບຄ້ຳປະກັນ ແລະ ຊວດຈຳສຳລັບໜັງສືຄ້ຳປະກັນທີ່ອອກໃຫ້ແກ່ລູກຄ້າ | 5,425,553 | 12,739,912 |
| | **ລວມຫຼັກຊັບຄ້ຳປະກັນ ແລະ ຊວດຈຳ** | **622,612,628** | **602,502,367** |

ກະກຽມໂດຍ:

ທ່ານ ສິດທິພົນ ສີສຸດາຈັນ
ຫົວໜ້າພະແນກການເງິນ

ອະນຸມັດໂດຍ:

ທ່ານ Tan Tee Huat
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

29 ເມສາ 2021

ທະນາຄານ ເມແບັງ ສາຂາລາວ

ໃບລາຍງານສ່ວນປ່ຽນແປງຂອງທຶນເຈົ້າຂອງ
ສໍາລັບປີທີ່ສິ້ນສຸດວັນທີ 31 ທັນວາ 2020

| *ລາຍການ* | *ທຶນຈົດທະບຽນທີ່ ຖອກແລ້ວ ພັນກີບ* | *ຄັງແຮຕາມ ລະບຽບການ ພັນກີບ* | *ເງິນແຮທົ່ວໄປສໍາລັບ ກິດຈະກໍາສິນເຊື່ອ ພັນກີບ* | *ຂາດທຶນສະສົມ ພັນກີບ* | *ລວມ ພັນກີບ* |
|---|---|---|---|---|---|
| **ຍອດເຫຼືອນະວັນທີ 1 ມັງກອນ 2020** | **100,661,400** | **5,633,965** | **677,735** | **(11,027,706)** | **95,945,394** |
| ໂອນມາຈາກ ເມແບັງ ສາຂາໜອງຄ້ອງ | 100,121,729 | - | 179,196 | (23,310,172) | 76,990,753 |
| ຂາດທຶນສຸດທິພາຍໃນປີ | - | - | - | (3,412,690) | (3,412,690) |
| ເງິນແຮທົ່ວໄປສໍາລັບໜີ້ປົກກະຕິທີ່ຫັກພາຍໃນປີ | - | - | (106,975) | - | (106,975) |
| ສ່ວນຜິດດ່ຽງຈາກອັດຕາແລກປ່ຽນເງິນຕາຕ່າງປະເທດ | - | - | 18,865 | - | 18,865 |
| **ຍອດເຫຼືອນະວັນທີ 31 ທັນວາ 2020** | **200,783,129** | **5,633,965** | **768,821** | **(37,750,568)** | **169,435,347** |

ກະກຽມໂດຍ:

ທ່ານ ສິດທິພົນ ສີສຸດາຈັນ
ຫົວໜ້າພະແນກການເງິນ

ອະນຸມັດໂດຍ:

ທ່ານ Tan Tee Huat
ຜູ້ອໍານວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

29 ເມສາ 2021

ທະນາຄານ ເມແບັງ ສາຂາລາວ

ໃບລາຍງານກະແສເງິນສົດ
ສໍາລັບປີທີ່ສິ້ນສຸດວັນທີ 31 ທັນວາ 2020

| *ລາຍການ* | *ບົດອະທິບາຍ ເລກທີ* | *2020 ພັນກີບ* | *2019 ພັນກີບ* |
|---|---|---|---|
| **ຂາດທຶນສຸດທິກ່ອນຫັກອາກອນ** | | **(3,412,690)** | **(7,902,795)** |
| *ດັດແກ້ສໍາລັບ:* | | | |
| ລາຍຈ່າຍຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມ | | 1,967,799 | 2,409,788 |
| ລາຍຈ່າຍເງິນແຮສໍາລັບກິດຈະກໍາສິນເຊື່ອສຸດທິ | 12.2 | 3,243,700 | 6,076,530 |
| ລາຍຮັບດອກເບ້ຍ | | (14,101,353) | (13,703,677) |
| ລາຍຈ່າຍດອກເບ້ຍ | | 6,677,391 | 7,820,056 |
| ກໍາໄລຈາກອັດຕາແລກປ່ຽນທີ່ເກີດຈາກການຕີມູນຄ່າຄືນໃໝ່ຂອງບັນຊີທີ່ເປັນເງິນໃນສະກຸນເງິນຕ່າງປະເທດ | | (1,361,829) | (1,126,171) |
| **ກະແສເງິນສົດນໍາໃຊ້ໃນກິດຈະກໍາການດໍາເນີນງານກ່ອນການປ່ຽນແປງຂອງຊັບສິນ ແລະ ໜີ້ສິນໃນການດໍາເນີນງານ** | | **(6,986,982)** | **(6,426,269)** |
| (ເພີ່ມຂຶ້ນ)/ຫຼຸດລົງຂອງຊັບສິນຈາກການດໍາເນີນງານ | | | |
| ໜີ້ຕ້ອງຮັບຈາກທະນາຄານອື່ນ | | 21,939,235 | (38,867,355) |
| ເງິນກູ້ ແລະ ເງິນລ່ວງໜ້າໃຫ້ແກ່ລູກຄ້າ | | 15,404,408 | (8,627,784) |
| ຊັບສິນອື່ນໆ | | (2,851,251) | 7,748,728 |
| ເພີ່ມຂຶ້ນ/(ຫຼຸດລົງ)ຂອງໜີ້ສິນຈາກການດໍາເນີນງານ | | | |
| ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ | | 2,782,472 | 49,646,161 |
| ເງິນຝາກ ແລະ ໜີ້ຕ້ອງສົ່ງອື່ນໆໃຫ້ລູກຄ້າ | | (15,887,898) | (15,309,250) |
| ໜີ້ສິນອື່ນໆ | | 3,820,119 | 190,286 |
| ດອກເບ້ຍໄດ້ຮັບ | | 12,307,081 | 13,748,175 |
| ດອກເບ້ຍຈ່າຍແລ້ວ | | (3,512,801) | (12,854,295) |
| **ກະແສເງິນສົດສຸດທິຈາກ/(ນໍາໃຊ້ໃນ)ກິດຈະກໍາການດໍາເນີນງານ** | | **27,014,383** | **(10,751,603)** |
| **ກິດຈະກໍາການລົງທຶນ** | | | |
| ຈ່າຍໃນການຊື້ຊັບສິນບັດ ແລະ ອຸປະກອນ | | (683,114) | (9,885,043) |
| **ກະແສເງິນສົດສຸດທິທີ່ນໍາໃຊ້ໃນກິດຈະກໍາການລົງທຶນ** | | **(683,114)** | **(9,885,043)** |

ທະນາຄານ ເມແບັງ ສາຂາລາວ

ໃບລາຍງານກະແສເງິນສົດ (ຕໍ່)
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2020

| *ລາຍການ* | *ບົດອະທິບາຍ ເລກທີ* | *2020 ພັນກີບ* | *2019 ພັນກີບ* |
|---|---|---|---|
| ກິດຈະກຳການເງິນ | | | |
| ກະແສເງິນສົດສຸດທິຈາກກິດຈະກຳການເງິນ | | - | - |
| ປ່ຽນແປງສຸດທິຂອງເງິນສົດ ແລະ ທຽບເທົ່າເງິນສົດ | | **26,331,269** | **(20,636,646)** |
| ເງິນສົດ ແລະ ທຽບເທົ່າເງິນສົດໃນຕົ້ນປີ | | **203,089,724** | **223,726,370** |
| ຜົນກະທົບຂອງສ່ວນຕ່າງຈາກອັດຕາແລກປ່ຽນເງິນຕາຕ່າງປະເທດ | | - | - |
| ເງິນສົດ ແລະ ທຽບເທົ່າເງິນສົດໃນທ້າຍປີ | **20** | **229,420,993** | **203,089,724** |

ກະກຽມໂດຍ:

ທ່ານ ສິດທິພົນ ສີສຸດາຈັນ
ຫົວໜ້າພະແນກການເງິນ

ອະນຸມັດໂດຍ:

ທ່ານ Tan Tee Huat
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

29 ເມສາ 2021

## 1. ຂໍ້ມູນທົ່ວໄປ

ທະນາຄານ ເມແບັງ ສາຂາລາວ ("ສາຂາ") ແມ່ນທະນາຄານສາຂາຕ່າງປະເທດ ເຊິ່ງລົງທຶນ ແລະ ຈົດທະບຽນໃນ ສປປ ລາວ.

*ການສ້າງຕັ້ງ ແລະ ການດໍາເນີນງານ*

ສາຂາໄດ້ສ້າງຕັ້ງຂຶ້ນເປັນສາຂາທະນາຄານ ມາເລຍັນ ເບີຫັດ, ທະນາຄານທີ່ຈົດທະບຽນໃນປະເທດມະເລເຊຍ. ສາຂາໄດ້ດໍາເນີນງານພາຍໃຕ້ໃບອະນຸຍາດດໍາເນີນທຸລະກິດເລກທີ 35/ທຫລ ໂດຍທະນາຄານແຫ່ງ ສປປ ລາວ ("ທຫລ") ວັນທີ 26 ຕຸລາ 2012 ແລະ ໃບອະນຸຍາດດໍາເນີນທຸລະກິດສະບັບປັບປຸງຄັ້ງທີສອງ ເລກທີ 18/ທຫລ ລົງວັນທີ 19 ພະຈິກ 2018.

ນະຕົ້ນປີໃນວັນທີ 1 ມັງກອນ 2020 ສາຂາດັ່ງກ່າວໄດ້ຮັບຊັບສິນ ແລ ໜີ້ສິນທັງໝົດພ້ອມທັງສິດ ແລະ ພັນທະຈາກ ທະນາຄານ ເມແບັງ ສາຂາ ໜອງດວງ ອີງຕາມການອະນຸມັດຈາກ ທະນາຄານ ແຫ່ງ ສປປ ລາວ ("ທຫລ").

ກິດຈະກໍາຕົ້ນຕໍຂອງສາຂາແມ່ນ ສະໜອງທຸກການບໍລິການດ້ານການທະນາຄານແບບຄອບຄຸມ ແລະ ການບໍລິການດ້ານການເງິນທີ່ກ່ຽວຂ້ອງໃນ ສປປ ລາວ.

*ສະຖານທີ່*

ສາຂາຕັ້ງຢູ່ບ້ານເລກທີ 43, 45, 47 ຖະໜົນ ລ້ານຊ້າງ, ບ້ານ ຫັດສະດີໃຕ້, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປລາວ.

*ພະນັກງານ*

ຈໍານວນພະນັກງານທັງໝົດຂອງສາຂາ ນະວັນທີ 31 ທັນວາ 2020 ມີ 28 ຄົນ (2019: 21 ຄົນ).

## 1. ຂໍ້ມູນທົ່ວໄປ (ຕໍ່)

*ເຫດການທີ່ສໍາຄັນ*

ນະວັນທີ 1 ມັງກອນ 2020 ສາຂາໄດ້ຮັບຊັບສິນ ແລະ ໜີ້ສິນພ້ອມດ້ວຍສິດ ແລະ ພັນທະທັງໝົດຈາກທະນາຄານເມແບັງ ສາຂາໜອງດ້ວງ ໂດຍອີງຕາມແຜນການປິດຂອງ ສາຂາໜອງດ້ວງທີ່ໄດ້ຮັບການອະນຸມັດຈາກ ທຫລ..

ໃນການປິດເມແບັງສາຂາໜອງດ້ວງພາຍໃນປີ 2019 ຊັບສິນ, ແລະ ໜີ້ສິນບາງສ່ວນທີ່ໄດ້ຖືກໂອນຈາກເມແບັງໜອງດ້ວງມີດັ່ງນີ້:

| | *ສໍາລັບປີທີ່ສິ້ນສຸດວັນທີ 31 ທັນວາ 2020 ພັນກີບ* |
|---|---:|
| **ຊັບສິນທີ່ໄດ້ໂອນຈາກ ທະນະຄານ ເມແບັງ ສາຂາ ໜອງດ້ວງ** | |
| ເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ | 25,031,729 |
| ເງິນຝາກຢູ່ທະນາຄານອື່ນ | 30,927,067 |
| ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ | 36,723,406 |
| ຊັບສິນບັດຄົງທີ່ (ມູນຄ່າສຸດທິ) | - |
| ຊັບສິນອື່ນໆ | 570,158 |
| **ລວມຊັບສິນກັບທະນາຄານ ເມແບັງ ສາຂາລາວ** | **93,252,360** |
| **ໜີ້ສິນທີ່ໄດ້ໂອນຈາກ ທະນະຄານ ເມແບັງ ສາຂາ ໜອງດ້ວງ** | |
| ໜີ້ຕ້ອງສົ່ງໃຫ້ລູກຄ້າ | 15,513,646 |
| ໜີ້ສິນອື່ນໆ | 747,961 |
| **ລວມໜີ້ສິນທີ່ກັບ ທະນະຄານ ເມແບັງ ສາຂາລາວ** | **16,261,607** |
| **ທຶນທີ່ໄດ້ໂອນຈາກ ທະນະຄານ ເມແບັງ ສາຂາ ໜອງດ້ວງ** | |
| ທຶນຈົດທະບຽນ | 100,121,729 |
| ເງິນແຮທົ່ວໄປສໍາລັບກິດຈະກໍາສິນເຊື່ອ | 179,196 |
| ກໍາໄລລໍຖ້າປັນຜົນ | (23,310,172) |
| **ລວມທຶນກັບ ທະນາຄານ ເມແບັງ ສາຂາລາວ** | **76,990,753** |

## 2. ສະຫຼຸບນະໂຍບາຍການບັນຊີທີ່ສໍາຄັນ

### 2.1 *ຖະແຫຼງການປະຕິບັດຕາມ*

ຄະນະບໍລິຫານຂອງສາຂາ ຕ້ອງໄດ້ມີການກະກຽມເອກະສານລາຍງານການເງິນ ໂດຍອີງຕາມກົດໝາຍການບັນຊີຂອງ ສປປ ລາວ ແລະ ບັນດາກົດລະບຽບທີ່ໄດ້ວາງອອກໂດຍທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນໍາສະເໜີເອກະສານລາຍງານການເງິນ.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### *2.2 ພື້ນຖານການກະກຽມ*

ສາຂາບັນທຶກບັນຊີເປັນເງິນກີບ ("ກີບ") ແລະ ໄດ້ກະກຽມເອກະສານລາຍງານການເງິນເປັນຫົວໜ່ວຍ ("ພັນກີບ") ໂດຍອີງຕາມດຳລັດເລກທີ 02/ນຍ ຂອງນາຍົກລັດຖະມົນຕີແຫ່ງ ສປປ ລາວ ລົງວັນທີ 22 ມີນາ 2000 ແລະ ກົດໝາຍການບັນຊີຂອງ ສປປ ລາວ ແລະ ລະບຽບການທີ່ກຳນົດໃຊ້ໂດຍທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ ("LAS").

ເອກະສານລາຍງານການເງິນສະບັບນີ້ໄດ້ຖືກກະກຽມໂດຍນຳໃຊ້ຫຼັກການບັນຊີ, ຂັ້ນຕອນ ແລະ ການລາຍງານທາງການບັນຊີທີ່ຖືກຍອມຮັບໃນ ສປປ ລາວ. ດັ່ງນັ້ນ, ໃບລາຍງານຜົນການດຳເນີນງານ, ໃບລາຍງານຖານະການເງິນ, ໃບລາຍງານສ່ວນປ່ຽນແປງຂອງທຶນເຈົ້າຂອງ, ໃບລາຍງານກະແສເງິນສົດ ແລະ ບົດອະທິບາຍຊ້ອນທ້າຍໃນເອກະສານລາຍງານແມ່ນບໍ່ໄດ້ສ້າງຂຶ້ນສຳລັບທ່ານທີ່ບໍ່ໄດ້ຮັບຮູ້ຫຼັກການບັນຊີ, ຂັ້ນຕອນ ແລະ ການປະຕິບັດການບັນຊີຂອງລາວ. ນອກນັ້ນ, ເອກະສານລາຍງານການເງິນສະບັບນີ້ບໍ່ມີຈຸດປະສົງເພື່ອນຳສະເໜີຖານະການເງິນ, ຜົນຂອງການດຳເນີນງານ ແລະ ກະແສເງິນສົດ ອີງຕາມຫຼັກການບັນຊີ ແລະ ການປະຕິບັດການບັນຊີທີ່ຍອມຮັບໄດ້ຂອງປະເທດອື່ນນອກຈາກ ສປປ ລາວ.

*ປີການບັນຊີ*

ປີການບັນຊີຂອງສາຂາແມ່ນເລີ່ມຕັ້ງແຕ່ວັນທີ 1 ມັງກອນ ແລະ ສິ້ນສຸດວັນທີ 31 ທັນວາ.

### *2.3 ການປ່ຽນແປງນະໂຍບາຍການບັນຊີ*

ນະໂຍບາຍການບັນຊີທີ່ຖືກຮັບຮອງໂດຍສາຂາໃນການກະກຽມເອກະສານລາຍງານການເງິນເຫຼົ່ານີ້ ແມ່ນມີຄວາມສອດຄ່ອງກັບຫຼັກການທີ່ນຳໃຊ້ໃນການກະກຽມເອກະສານລາຍງານການເງິນຂອງສາຂາ ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2019.

### *2.4 ການຮັບຮູ້ລາຍຮັບ ແລະ ລາຍຈ່າຍດອກເບ້ຍ*

ລາຍຮັບ ແລະ ລາຍຈ່າຍດອກເບ້ຍ ໄດ້ຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານ ໂດຍອີງຕາມຫຼັກການແບບຄ້າງຮັບຄ້າງຈ່າຍທີ່ນຳໃຊ້ວິທີການຄິດໄລ່ແບບສະເໝີຕົວ ແລະ ອັດຕາດອກເບ້ຍທີ່ຖືກກຳນົດໄວ້ໃນສັນຍາເງິນກູ້ ແລະ ເງິນຝາກຂອງລູກຄ້າ.

ການຮັບຮູ້ລາຍຮັບດອກເບ້ຍຄ້າງຮັບຈະຖືກລະງັບກໍ່ຕໍ່ເມື່ອເງິນກູ້ກາຍເປັນໜີ້ທີ່ບໍ່ເກີດດອກອອກຜົນ (ອີງຕາມບົດອະທິບາຍເລກທີ 2.8 ສຳລັບນິຍາມຂອງເງິນກູ້ທີ່ບໍ່ເກີດດອກອອກຜົນ) ຫຼື ເມື່ອຄະນະບໍລິຫານເຫັນວ່າຜູ້ກູ້ຢືມບໍ່ມີຄວາມສາມາດຊຳລະຄືນໄດ້ທັງດອກເບ້ຍ ແລະ ຕົ້ນທຶນ. ລາຍຮັບດອກເບ້ຍເງິນກູ້ດັ່ງກ່າວແມ່ນໄດ້ຖືກບັນທຶກເຂົ້າໃນໃບລາຍງານຜົນການດຳເນີນງານກໍ່ຕໍ່ເມື່ອໄດ້ຮັບເງິນຕົວຈິງ.

### *2.5 ການຮັບຮູ້ລາຍຮັບຄ່າທຳນຽມ ແລະ ຄ່ານາຍໜ້າ*

ຄ່າທຳນຽມ ແລະ ຄ່ານາຍໜ້າປະກອບດ້ວຍຄ່າທຳນຽມທີ່ໄດ້ຮັບຈາກການໂອນເງິນ (ລວມທັງການຊຳລະທາງການຄ້າ), ຄ່າທຳນຽມຈາກການແລກປ່ຽນເງິນຕາຕ່າງປະເທດ ແລະ ຄ່າທຳນຽມທີ່ເກີດຂຶ້ນຈາກການອອກໜັງສືຄ້ຳປະກັນທາງການເງິນ.

ລາຍຮັບຈາກຄ່າທຳນຽມ ແລະ ຄ່ານາຍໜ້າແມ່ນໄດ້ຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານບົນພື້ນຖານຖືຫຼັກການບັນຊີເງິນສົດ.

**2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)**

***2.6 ເງິນສົດ ແລະ ທຽບເທົ່າເງິນສົດ***

ເງິນສົດ ແລະ ທຽບເທົ່າເງິນສົດແມ່ນລວມມີເງິນສົດ, ການລົງທຶນໄລຍະສັ້ນທີ່ມີສະພາບຄ່ອງສູງເຊິ່ງມີກຳນົດບໍ່ເກີນ 30 ວັນທີ່ສາມາດປ່ຽນເປັນເງິນສົດໄດ້ໃນທັນທີ; ແລະ ບັນຊີເງິນຝາກຢູ່ກັບທະນາຄານອື່ນທີ່ມີກຳນົດບໍ່ເກີນ 30 ວັນ.

***2.7 ເງິນກູ້ຢືມແກ່ລູກຄ້າ***

ເງິນກູ້ຢືມແກ່ລູກຄ້າແມ່ນຖືກຮັບຮູ້ຕາມຕົ້ນທຶນ ແລະ ສະແດງຍອດເຫຼືອທ້າຍລົບໃຫ້ເງິນແຮສະເພາະສຳລັບກິດຈະກຳສິນເຊື່ອນະທ້າຍປີ.

***2.8 ການຈັດປະເພດ ແລະ ຫັກເງິນແຮສຳລັບກິດຈະກຳສິນເຊື່ອ***

*ການຈັດປະເພດສິນເຊື່ອ*

ອີງຕາມຂໍ້ຕົກລົງເລກທີ 512/ທຫລ ("ທຫລ 512") ລົງວັນທີ 29 ມິຖຸນາ 2018 ແລະ ຈົດໝາຍທາງການ ເລກທີ 898/ກຄທ ("OL898") ລົງວັນທີ 14 ພະຈິກ 2018, ສາຂາໄດ້ຈັດຊັ້ນເງິນກູ້ອອກເປັນ 5 ກຸ່ມ ໂດຍອີງຕາມ ປະຫວັດການຄ້າງຈ່າຍ ແລະ ປັດໄຈເຊີງຄຸນະພາບອື່ນໆ. ເງິນກູ້ ຖືກຈັດຊັ້ນເປັນໜີ້ປົກກະຕິ (ກຸ່ມ A) ຫຼື ໜີ້ຄວນເອົາໃຈໃສ່ (ກຸ່ມ B) ແມ່ນຈະຖືກພິຈາລະນາເປັນເງິນກູ້ທີ່ເກີດດອກອອກຜົນ, ເງິນກູ້ທີ່ຖືກຈັດຊັ້ນເປັນໜີ້ຕໍ່າກວ່າມາດຕະຖານ (ກຸ່ມ C) ຫຼື ໜີ້ສົງໄສ (ກຸ່ມ D) ຫຼື ໜີ້ສູນ (ກຸ່ມ E) ແມ່ນຈະຖືກພິຈາລະນາເປັນ ເງິນກູ້ທີ່ບໍ່ເກີດດອກອອກຜົນ ຫຼື ໜີ້ຕ້ອງຮັບທວງຍາກ ("NPL").

ສາຂາຍັງນຳໃຊ້ກົດລະບຽບ 238/ທຫລ ລົງວັນທີ 26 ມີນາ 2020 ແລະ ຄຳແນະນຳ 249/ທຫລ ລົງວັນທີ 11 ພຶດສະພາ 2020 ໂດຍ ທຫລ ກ່ຽວກັບການປັບໂຄງສ້າງເງິນກູ້ຢືມ, ການຂະຫຍາຍເວລາ ແລະ ການຮັກສາການຈັດຊັ້ນຂອງເງິນກູ້ເພື່ອຊ່ວຍຜູ້ກູ້ຢືມທີ່ໄດ້ຮັບຜົນກະທົບຈາກການລະບາດຂອງໂລກລະບາດໂຄວິດ 19. ດັ່ງນັ້ນ, ສາຂາໄດ້ປັບໂຄງສ້າງເງິນກູ້ທີ່ມີຄຸນນະພາບ ແລະ ຮັກສາການຈັດຊັ້ນໜີ້ຂອງເຂົາເຈົ້າຄືເກົ່າກ່ອນວັນທີ 01 ມັງກອນ 2020.

*ການຫັກເງິນແຮ*

ອີງຕາມ ທຫລ 512 ແລະ OL898, ສາຂາສ້າງຕັ້ງແຮສຳລັບເງິນກູ້ຕາມການຈັດຊັ້ນໜີ້ ດັ່ງລຸ່ມນີ້:

| *ກຸ່ມ* | *ອັດຕາເງິນແຮ* | *ປະເພດຕັ້ງເງິນແຮ (i)* | *ບັນຊີສຳລັບຍອດເຫຼືອເງິນແຮ (ii)* | *ບັນຊີສຳລັບການປ່ຽນແປງຍອດເຫຼືອເງິນແຮ (iii)* |
|---|---|---|---|---|
| *ເງິນກູ້ທົ່ວໄປ* | | | | |
| A | 0.5% | ທົ່ວໄປ | ໃນສ່ວນທຶນເຈົ້າຂອງ | ລາຍຈ່າຍອື່ນໆໃນການດຳເນີນງານ |
| B | 3.0% | ສະເພາະ | ຫັກອອກຍອດເຫຼືອເງິນກູ້ | ລາຍຈ່າຍອື່ນໆໃນການດຳເນີນງານ |
| *ເງິນກູ້ບໍ່ເກີດດອກອອກຜົນ* | | | | |
| C | 20.0% | ສະເພາະ | ຫັກອອກຍອດເຫຼືອເງິນກູ້ | ເງິນແຮສຸດທິສຳລັບເງິນກູ້ |
| D | 50.0% | ສະເພາະ | ຫັກອອກຍອດເຫຼືອເງິນກູ້ | ເງິນແຮສຸດທິສຳລັບເງິນກູ້ |
| E | 100.0% | ສະເພາະ | ຫັກອອກຍອດເຫຼືອເງິນກູ້ | ເງິນແຮສຸດທິສຳລັບເງິນກູ້ |

**2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)**

**2.8 *ການຈັດປະເພດ ແລະ ຫັກເງິນແຮສຳລັບກິດຈະກຳສິນເຊື່ອ* (ຕໍ່)**

(i) ຈຳນວນເງິນແຮແມ່ນຄິດໄລ່ຈາກສູດລຸ່ມນີ້:

ກ. ເງິນແຮສຳລັບເງິນກູ້ທີ່ເກີດດອກອອກຜົນ = ອັດຕາເງິນແຮ x ຍອດເຫຼືອເງິນກູ້

ຂ. ເງິນແຮສຳລັບເງິນກູ້ບໍ່ເກີດດອກອອກຜົນ = ອັດຕາເງິນແຮ x ຍອດເຫຼືອເງິນກູ້

*ທະນາຄານໄດ້ເລືອກທີ່ຈະບໍ່ລວມເອົາມູນຄ່າຫຼຸດຫຼັກຊັບຄ້ຳປະກັນໃນການຄິດໄລ່ການເງິນແຮຕາມທີ່ໄດ້ອະນຸຍາດຕາມຂໍ້ກຳນົດ ທຫລ 512 ແລະ ທຫລ 898*

(ii) ຍອດເຫຼືອເງິນແຮສຳລັບ *ເງິນກູ້ທີ່ຖືກຈັດຊັ້ນເປັນກຸ່ມ A* ແມ່ນບັນທຶກໃນໃບລາຍງານຖານະການເງິນໃນ "ເງິນແຮທົ່ວໄປ" ພາຍໃຕ້ທຶນ ແລະ ຄັງສຳຮອງຂອງສາຂາ.

ຍອດເຫຼືອສະສົມຂອງເງິນແຮສຳລັບ *ເງິນກູ້ທີ່ບໍ່ອອກດອກອອກຜົນ ແລະ ເງິນກູ້ທີ່ຈັດຊັ້ນຢູ່ຊັ້ນ B* ແມ່ນໄດ້ບັນທຶກໃນໃບລາຍງານຖານະການເງິນ *"ເງິນກູ້ໃຫ້ລູກຄ້າ, ຫັກເງິນແຮສະເພາະກິດຈະກຳສິນເຊື່ອ"*.

(iii) ສ່ວນປ່ຽນແປງສຸດທິສຳລັບເງິນແຮຂອງ *ເງິນກູ້ທີ່ເກີດດອກອອກຜົນ* ແມ່ນຖືກບັນທຶກໃນໃບລາຍງານຜົນການດຳເນີນງານ ຢູ່ "ລາຍຈ່າຍຈາກການດຳເນີນງານອື່ນໆ".

ການປ່ຽນແປງໃນເງິນແຮສຳລັບເງິນແຮບໍ່ເກີດດອກອອກຜົນ ແມ່ນໄດ້ຖືກບັນທຶກໃນໃບລາຍງານຜົນການດຳເນີນງານເປັນ *"ເງິນແຮສຸດທິສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນທີ່ໄດ້ຫັກໄວ້/(ຈຶດລ້າງອອກ) ເປັນລາຍຈ່າຍ"*.

**2.9 *ຊັບສົມບັດຄົງທີ່***

ຊັບສົມບັດຄົງທີ່ລວມມີຊັບສົມບັດຄົງທີ່ມີຕົວຕົນ, ບໍ່ມີຕົວຕົນ ແລະ ຊັບສົມບັດຄົງທີ່ພວມດຳເນີນງານ. ຊັບສົມບັດຄົງທີ່ມີຕົວຕົນປະກອບມີ: ອາຄານ ແລະ ການປັບປຸງ, ອຸປະກອນຫ້ອງການ, ເຟີນີເຈີ ແລະ ສິ່ງຕິດຕັ້ງ, ອຸປະກອນຄອມພິວເຕີ ແລະ ພາຫານະ. ຊັບສົມບັດຄົງທີ່ບໍ່ມີຕົວຕົນປະກອບມີຄອມພິວເຕີຊອບແວ.

ຊັບສົມບັດຄົງທີ່ໄດ້ຖືກລາຍງານຕາມຕົ້ນທຶນລົບໃຫ້ຄ່າຫລຸ້ຍຫ້ຽນສະສົມ ແລະ ຄ່າເສື່ອມ, ຖ້າມີ.

ຕົ້ນທຶນຂອງຊັບສົມບັດປະກອບດ້ວຍມູນຄ່າຊື້ບວກກັບຄ່າໃຊ້ຈ່າຍທີ່ກ່ຽວຂ້ອງທາງກົງອື່ນໆໃນການເຮັດໃຫ້ຊັບສິນຢູ່ໃນສະພາບທີ່ພ້ອມໃຊ້ງານ.

ບັນດາລາຍຈ່າຍສຳລັບການຊື້ເພີ່ມ, ລາຍຈ່າຍການປັບປຸງ ແລະ ການຕໍ່ອາຍຸແມ່ນຈະຖືກຕີເປັນຕົ້ນທຶນ ແລະ ລາຍຈ່າຍສຳລັບຄ່າບຳລຸງຮັກສາ ແລະ ຄ່າສ້ອມແປງແມ່ນຈະຖືກບັນທຶກຢູ່ໃນໃບລາຍງານຜົນການດຳເນີນງານ.

ເມື່ອຊັບສົມບັດຖືກຂາຍ ຫຼື ໝົດອາຍຸ, ຕົ້ນທຶນ ແລະ ຄ່າຫຼຸ້ຍຫ້ຽນ/ຄ່າເສື່ອມສະສົມຈະຖືກສະສາງຈາກໃບລາຍງານຖານະການເງິນ ແລະ ກຳໄລ ຫຼື ຂາດທຶນທີ່ມາຈາກການຂາຍອອກທີ່ຖືກບັນທຶກຢູ່ໃນໃບລາຍງານຜົນການດຳເນີນງານ.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### *2.10 ຄ່າຫລຸ້ຍຫ້ຽນ ແລະ ຄ່າເສື່ອມຂອງຊັບສົມບັດຄົງທີ່*

ຄ່າຫລຸ້ຍຫ້ຽນຂອງຊັບສົມບັດຄົງທີ່ ແມ່ນຖືກຄິດໄລ່ຕາມວິທີຄິດໄລ່ແບບສະເໝີຕົວໃນອັດຕາທີ່ກຳນົດໃຊ້ຕໍ່ອາຍຸການນຳໃຊ້ທີ່ຄາດຄະເນຂອງຊັບສົມບັດເຫຼົ່ານັ້ນ ອີງຕາມກົດໝາຍສ່ວຍສາອາກອນຂອງ ສປປ ລາວ ເລກທີ 67/ສພຊ ລົງວັນທີ 18 ມິຖຸນາ 2019 ອອກໂດຍປະທານສະພາແຫ່ງຊາດ ເຊິ່ງມີຜົນບັງຄັບໃຊ້ທັງຈາກວັນທີ 1 ມັງກອນ 2020 ເປັນຕົ້ນໄປ, ອັດຕາໃຊ້ປະຈຳປີມີດັ່ງຕໍ່ໄປນີ້:

| | |
|---|---|
| *ຊັບສົມບັດຄົງທີ່ມີຕົວຕົນ:* | |
| ອາຄານ ແລະ ການປັງປຸງ | 10% |
| ອຸປະກອນຫ້ອງການ | 20% |
| ເຄື່ອງເຟີນີເຈີ ແລະ ສິ່ງຕິດຕັ້ງ | 20% |
| ອຸປະກອນຄອມພິວເຕີ | 20% |
| ພາຫະນະ | 20% |
| *ຊັບສົມບັດຄົງທີ່ບໍ່ມີຕົວຕົນ:* | |
| ຄອມພິວເຕີຊອບແວ | 20% |

### *2.11 ຄັງສຳຮອງຕາມລະບຽບການ*

ພາຍໃຕ້ຂໍ້ກຳນົດຂອງກົດໝາຍວ່າດ້ວຍທະນາຄານທຸລະກິດລົງວັນທີ 7 ທັນວາ 2018, ໄດ້ກຳນົດທະນາຄານທຸລະກິດຕ້ອງຮັກສາກຳໄລສຸດທິຕາມຄັງສະສົມດັ່ງຕໍ່ໄປນີ້:

- ຄັງສຳຮອງຕາມລະບຽບການ
- ຄັງຂະຫຍາຍທຸລະກິດແລະຄັງອື່ນໆ

ອີງຕາມມາດຕາ 156, ກົດໝາຍວ່າດ້ວຍວິສາຫະກິດ ວັນທີ 26 ທັນວາ 2013, ສາຂາຕ້ອງໄດ້ສຳຮອງ 10% ຂອງກຳໄລຫຼັງຫັກອາກອນເພື່ອສ້າງຄັງສຳຮອງໄວ້ໃນແຕ່ລະປີ. ເມື່ອຄັງສຳຮອງດັ່ງກ່າວຮອດ 50% ຂອງທຶນຈົດທະບຽນ, ສາຂາສາມາດໂຈະການຫັກເງິນແຮ, ນອກຈາກວ່າ ກົດໝາຍຈະລະບຸໄວ້ຢ່າງອື່ນ. ຄັງສະສົມ ແລະ ຄັງອື່ນໆຂອງສາຂາ ແມ່ນຂຶ້ນກັບການຕັດສິນໃຈຂອງຄະນະບໍລິຫານ. ສຳລັບປີສິ້ນສຸດວັນທີ 31 ທັນວາ 2020, ການດຳເນີນງານຂອງສາຂາແມ່ນຂາດທຶນ ແລະ ບໍ່ໄດ້ມີການຈັດສັນຄັງແຮດັ່ງກ່າວ.

**2.** **ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)**

***2.12*** ***ການເຊົ່າ***

*2.12.1. ສິດໃນການນຳໃຊ້ຊັບສິນ*

ເມື່ອເລີ່ມຕົ້ນເຮັດສັນຍາ, ສາຂາຈະປະເມີນການຈັດສັນຍາເຊົ່າ ຫຼື ອີງໃສ່ສັນຍາການເຊົ່າທີ່ເຮັດໃຫ້ຜູ້ຊົມໃຊ້ (ຜູ້ເຊົ່າ) ມີສິດໃນການຄວບຄຸມການນຳໃຊ້ຊັບສິນທີ່ໄດ້ລະບຸໄວ້ເປັນແຕ່ລະໄລຍະເວລາໃນການແລກປ່ຽນເພື່ອພິຈາລະນາ. ຖ້າສັນຍາລະບຸໄວ້ມີຫຼາຍກວ່າໜຶ່ງສ່ວນປະກອບຂອງການໃຫ້ເຊົ່າ, ຫຼື ການປະສົມປະສານຂອງການໃຫ້ເຊົ່າ ແລະ ທຸລະກຳການໃຫ້ບໍລິການ, ການພິຈາລະນາຈະຖືກຈັດສັນໃຫ້ແຕ່ລະປະເພດຂອງສັນຍາການເຊົ່າ ແລະ ທີ່ບໍ່ແມ່ນການເຊົ່າໃນການສະຫລຸບໃນແຕ່ລະການວັດແທກຄືນໃໝ່ຂອງສັນຍາບົນພື້ນຖານລາຄາຂາຍທີ່ກ່ຽວຂ້ອງຂອງພວກເຂົາ. ສາຂາລວມເອົາແຕ່ລະພາກສ່ວນຂອງການໃຫ້ເຊົ່າ ແລະ ທີ່ບໍ່ແມ່ນການໃຫ້ເຊົ່າ, ໃນກໍລະນີທີ່ບໍ່ສາມາດແຍກສ່ວນປະກອບທີ່ບໍ່ແມ່ນການໃຫ້ເຊົ່າ.

ສາຂາຮັບຈະຮັບຮູ້ ສິດນຳໃຊ້ຊັບສິນທີ່ຖືກຕ້ອງໃນວັນທີ ທີ່ເລີ່ມຕົ້ນການເຊົ່າ (ຕົວຢ່າງ, ວັນທີ ທີ່ຊັບສິນພ້ອມໃຊ້ງານ). ສິດນຳໃຊ້ຊັບສິນແມ່ນຖືກຕີມູນຄ່າດ້ວຍມູນຄ່າຕົ້ນທຶນ ຫັກລົບໃຫ້ຄ່າຫຼຸ້ຍຫ້ຽນສະສົມ ແລະ ຄ່າເສື່ອມ, ແລະ ປັບປຸງສຳລັບການຕີມູນຄ່າຄືນໃໝ່ຂອງໜີ້ສິນທີ່ເປັນການເຊົ່າ. ມູນຄ່າຕົ້ນທຶນຂອງສິດນຳໃຊ້ຊັບສິນແມ່ນລວມເອົາຈຳນວນຂອງໜີ້ສິນທີ່ເປັນການເຊົ່າທີ່ໄດ້ຖືກດັດແກ້ສຳລັບການຈ່າຍຄ່າເຊົ່າ ທີ່ໄດ້ປະຕິບັດໄປແລ້ວ ຫຼື ກ່ອນມື້ທີ່ເລີ່ມຕົ້ນນຳໃຊ້, ບວກຄ່າໃຊ້ຈ່າຍທາງກົງໃນເບື້ອງຕົ້ນທີ່ເກີດຂຶ້ນ ແລະ ການຄາດຄະເນຄ່າໃຊ້ຈ່າຍໃນການຮື້ຖອນ ແລະ ເຄື່ອນຍ້າຍຊັບສິນ ຫຼື ການຟື້ນຟູຊັບສິນທີ່ຕິດພັນ ຫຼື ສະຖານທີ່ທີ່ມັນຕັ້ງຢູ່, ຫັກລົບໃຫ້ລາຍຮັບທີ່ໄດ້ຈາກການເຊົ່າ. ໄລຍະເວລາການເຊົ່າລວມເຖິງໄລຍະເວລາທີ່ກວມເອົາທາງເລືອກໃນການຂະຫຍາຍ ຖ້າຫາກວ່າກຸ່ມບໍລິສັດມີຄວາມໝັ້ນໃຈໃນການໃຊ້ທາງເລືອກນັ້ນ. ຍົກເວັ້ນ ກໍລະນີທີ່ທະນາ ຄານມີຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າຈະໄດ້ຮັບກຳມະສິດໃນຊັບສິນທີ່ໃຫ້ເຊົ່າເມື່ອສິ້ນສຸດໄລຍະເວລາການເຊົ່າ, ການຮັບຮູ້ສິດນຳໃຊ້ຊັບສິນໃຫ້ເປັນຄ່າຫຼຸ້ຍຫ້ຽນບົນພື້ນຖານຮູບແບບການຄິດໄລ່ແບບເສັ້ນຊື່ຕາມອາຍຸການໃຊ້ງານ. ສິດໃນການນຳໃຊ້ຊັບສິນແມ່ນຂຶ້ນກັບການປະເມີນຄ່າເສື່ອມ.

*2.12.2. ໜີ້ສິນຕາມສັນຍາເຊົ່າ*

ນະວັນທີ ທີ່ເລີ່ມຕົ້ນຂອງການເຊົ່າ, ສາຂາໄດ້ຮັບຮູ້ ໜີ້ສິນຕາມສັນຍາເຊົ່າຖືກຕີມູນຄ່າຕາມມູນຄ່າປັດຈຸບັນຂອງການຈ່າຍຄ່າເຊົ່າຕາມໄລຍະເວລາຂອງການເຊົ່າ. ການຈ່າຍຄ່າເຊົ່າແມ່ນລວມເຖິງການຈ່າຍແບບຄົງທີ່ (ລວມທັງການຈ່າຍເປັນກຳມະສິດ) ຫັກລົບໃຫ້ລາຍຮັບທີ່ໄດ້ຈາກການເຊົ່າ, ການຈ່າຍຄ່າເຊົ່າຜັນແປ ເຊິ່ງຂຶ້ນກັບດັດສະນີ ຫຼື ອັດຕາ, ແລະ ມູນຄ່າຄາດຄະເນວ່າຈະຈ່າຍພາຍໃຕ້ການຄ້ຳປະກັນມູນຄ່າທີ່ເຫຼືອ. ການຈ່າຍຄ່າເຊົ່າລວມເຖິງລາຄາການໃຊ້ສິດຂອງທາງເລືອກໃນການຊື້ທີ່ສົມເຫດສົມຜົນທີ່ທະນາຄານຈະຕ້ອງໃຊ້ ແລະ ການຈ່າຍຄ່າປັບໃໝສຳລັບການຍົກເລີກສັນຍາຫາກໄລຍະເວລາການເຊົ່າສະທ້ອນໃຫ້ເຫັນເຖິງການໃຊສິດຂອງສາຂາໃນການຍົກເລີກ. ຄ່າເຊົ່າຜັນແປທີ່ບໍ່ຂຶ້ນກັບດັດສະນີ ຫຼື ອັດຕາ ຈະຖືກຮັບຮູ້ເປັນຄ່າໃຊ້ຈ່າຍໃນຊ່ວງເວລາທີ່ເຫດການ ຫຼື ເງື່ອນໄຂທີ່ເຮັດໃຫ້ເກີດມີການຊຳລະ.

ໃນການຄິດໄລ່ມູນຄ່າປັດຈຸບັນຂອງຄ່າເຊົ່າ, ສາຂານຳໃຊ້ອັດຕາດອກເບ້ຍເງິນກູ້ຢືມສ່ວນເພີ່ມນະມື້ທີ່ເລີ່ມການເຊົ່າ ຖ້າຫາກວ່າອັດຕາດອກເບ້ຍໃນການເຊົ່າບໍ່ສາມາດຫາໄດ້ໂດຍງ່າຍ. ຫຼັງຈາກມື້ທີ່ເລີ່ມການເຊົ່າ, ມູນຄ່າຂອງໜີ້ສິນຕາມສັນຍາເຊົ່າແມ່ນຖືກເພີ່ມຂຶ້ນຕາມການເພີ່ມຂຶ້ນຂອງດອກເບ້ຍ ແລະ ຫຼຸດລົງສຳລັບຄ່າເຊົ່າທີ່ຕ້ອງຈ່າຍ. ນອກຈາກນີ້ ມູນຄ່າຕາມບັນຊີຂອງໜີ້ສິນຕາມສັນຍາເຊົ່າຈະຖືກຮັບຮູ້ ກໍ່ຕໍ່ເມື່ອມີການປ່ຽນແປງໃນສ່ວນຂອງໄລຍະເວລາຂອງການຈ່າຍຄ່າເຊົ່າແບບຄົງທີ່ ທີ່ມີເນື້ອຫາສຳຄັນ ຫຼື ການປ່ຽນແປງທາງດ້ານການປະເມີນເພື່ອຊື້ຊັບສິນດັ່ງກ່າວ.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 2.12 *ການເຊົ່າ* (ຕໍ່)

#### *2.12.3. ສັນຍາເຊົ່າໄລຍະສັ້ນ ແລະ ສັນຍາເຊົ່າຊັບສິນທີ່ມີມູນຄ່າຕໍ່າ*

ສາຂານຳໃຊ້ການຍົກເວັ້ນການຮັບຮູ້ສັນຍາເຊົ່າໄລຍະສັ້ນທີ່ມີສັນຍາເຊົ່າ 12 ເດືອນ ຫຼື ໜ້ອຍກວ່ານັບແຕ່ມື້ເລີ່ມຕົ້ນ ແລະ ບໍ່ມີຕົວເລືອກໃນການຊື້. ນອກຈາກນີ້ ຍັງໃຊ້ການຍົກເວັ້ນການຮັບຮູ້ ການເຊົ່າຊັບສິນທີ່ມີມູນຄ່າຕໍ່າ ມາເປັນການເຊົ່າຊັບສິນທີ່ຖືກພິຈາລະນາໃຫ້ເປັນມູນຄ່າຕໍ່າ. ການຈ່າຍຄ່າເຊົ່າ ສຳລັບການເຊົ່າທີ່ມີໄລຍະສັ້ນ ແລະ ການເຊົ່າຊັບສິນທີ່ມີມູນຄ່າຕໍ່າ ແມ່ນຖືກຮັບຮູ້ເປັນຄ່າໃຊ້ຈ່າຍຕາມວິທີເສັ້ນຊື່ຕາມອາຍຸສັນຍາເຊົ່າ.

#### *2.12.4. ການຕັດສິນໃຈທີ່ສຳຄັນໃນການກຳນົດໄລຍະເວລາຂອງສັນຍາພ້ອມການອາຍຸ*

ທະນາຄານໄດ້ກຳນົດໄລຍະເວລາການເຊົ່າເປັນໄລຍະເວລາທີ່ບໍ່ສາມາດຍົກເລີກສັນຍາໄດ້, ລວມທັງໄລຍະເວລາທີ່ກວມເອົາທາງເລືອກທີ່ຈະຕໍ່ອາຍຸຂອງການເຊົ່າ ຖ້າຫາກວ່າມັນມີເຫດຜົນທີ່ແນ່ນອນໃນການຈັດຕັ້ງປະຕິບັດ, ຫຼື ໄລຍະເວລາ ໃດໜຶ່ງທີ່ກວມເອົາທາງເລືອກທີ່ຈະຢຸດສັນຍາເຊົ່າ, ຖ້າຫາກວ່າ ມັນມີເຫດຜົນທີ່ແນ່ນອນວ່າ ບໍ່ຄວນສືບຕໍ່ເຊົ່າຕໍ່ໄປ.

ທະນາຄານນຳໃຊ້ການຕັດສິນໃຈໃນການປະເມີນວ່າ ມີເຫດຜົນທີ່ແນ່ນອນບໍ ທີ່ຈະສືບຕໍ່ໃນການຕໍ່ອາຍຸສັນຍາເຊົ່າ. ນັ້ນແມ່ນການພິຈາລະນາທຸກໆປັດໄຈທີ່ກ່ຽວຂ້ອງທີ່ຈະສ້າງແຮງຈູງໃຈໃນການຕໍ່ອາຍຸສັນຍາເພື່ອດຳເນີນທຸລະກິດ. ຫຼັງຈາກມື້ທີ່ເລີ່ມການເຊົ່າ, ທະນາຄານໄດ້ໃຫ້ການປະເມີນຄືນສັນຍາເຊົ່າ ຖ້າຫາກມີເຫດການທີ່ສຳຄັນ ຫຼື ການປ່ຽນແປງໃນສະພາບການທີ່ຢູ່ໃນການຄວບຄຸມ ແລະ ສິ່ງຜົນກະທົບຕໍ່ຄວາມສາມາດໃນການດຳເນີນງານ (ຫຼື ການບໍ່ດຳເນີນງານ) ທາງເລືອກໃນການຕໍ່ສັນຍາ (ຕົວຢ່າງ ການປ່ຽນແປງຍຸດທະສາດຂອງທຸລະກິດ). ທະນາຄານໄດ້ລວມເອົາໄລຍະເວລາຕໍ່ອາຍຸສັນຍາເຊົ່າສຳລັບການເຊົ່າສະຖານທີ່ ແລະ ອຸປະກອນໄອທີ ເນື່ອງຈາກຄວາມສຳຄັນຂອງຊັບສິນເຫຼົ່ານີ້ເຂົ້າໃນການດຳເນີນງານຂອງທະນາຄານ.

### 2.13 *ການເຄື່ອນໄຫວເປັນສະກຸນເງິນຕາຕ່າງປະເທດ*

ການບັນທຶກທຸກທຸລະກຳຕາມສະກຸນເງິນເດີມ ແມ່ນຖືກປ່ຽນຄ່າເປັນສະກຸນເງິນກີບທຸກໆເດືອນ ໂດຍການນຳໃຊ້ອັດຕາແລກປ່ຽນປະຈຳວັນຂອງເດືອນດັ່ງກ່າວ. ຊັບສິນ ແລະ ໜີ້ສິນທາງການເງິນທີ່ເປັນເງິນຕາຕ່າງປະເທດໃນທ້າຍປີ ໄດ້ຖືກຕີມູນຄ່າເປັນເງິນກີບ ຕາມອັດຕາແລກປ່ຽນໃນມື້ກະກຽມໃບລາຍງານຖານະການເງິນ. ຄ່າຜິດດ່ຽງຈາກການແລກປ່ຽນຊັບສິນ ແລະ ໜີ້ສິນທາງການເງິນໃນມື້ສ້າງໃບລາຍງານຖານະການເງິນ ແມ່ນຖືກບັນທຶກເຂົ້າໃນໃບລາຍງານຜົນການດຳເນີນງານ.

| | *31 ທັນວາ 2020* | *31 ທັນວາ 2019* |
|---|---|---|
| | *ກີບ* | *ກີບ* |
| ໂດລາສະຫະລັດ ("ໂດລາ") | 9,272 | 8,860 |
| ບາດໄທ ("ບາດ") | 329.10 | 298 |

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 2.14 *ອາກອນ*

ຄັງແຮແມ່ນຖືກສ້າງຂຶ້ນສຳລັບອາກອນກຳໄລຕາມກຳໄລໃນໄລຍະປັດຈຸບັນ ໂດຍອີງຕາມກົດໝາຍສ່ວຍສາອາກອນວ່າດ້ວຍການເກັບອາກອນພາຍໃນ ສປປ ລາວ. ສາຂາມີພັນທະຕ້ອງຈ່າຍອາກອນໃນອັດຕາ 20% ຂອງກຳໄລທັງໝົດກ່ອນຫັກອາກອນສຳລັບທ້າຍປີວັນທີ 31 ທັນວາ 2020 (2019: 24%) ໂດຍອີງຕາມກົດໝາຍສ່ວຍອາກອນສະບັບປັບປຸງເລກທີ 67/ສພຊ ລົງວັນທີ 18 ມິຖຸນາ 2019 ເຊິ່ງມີຜົນສັກສິດຕັ້ງແຕ່ວັນທີ 1 ມັງກອນ 2020.

ການແຈ້ງອາກອນຂອງສາຂາຕ້ອງໄດ້ຮັບການກວດກາໂດຍເຈົ້າໜ້າທີ່ສ່ວຍສາອາກອນ. ຍ້ອນວ່າການນຳໃຊ້ກົດໝາຍສ່ວຍສາອາກອນ ແລະ ລະບຽບການຕ່າງໆ ແມ່ນມີຫຼາຍປະເພດເຊິ່ງອາດຈະແປຄວາມໄດ້ເປັນຫລາຍຢ່າງ, ມູນຄ່າທີ່ໄດ້ຖືກລາຍງານຢູ່ໃນເອກະສານລາຍງານການເງິນອາດຈະມີການປ່ຽນແປງຂຶ້ນກັບການໄລ່ລຽງຂອງເຈົ້າໜ້າທີ່ສ່ວຍສາອາກອນ.

### 2.15 *ຜົນປະໂຫຍດຂອງພະນັກງານ*

*ຜົນປະໂຫຍດຫຼັງອອກການ*

ຜົນປະໂຫຍດຫຼັງອອກການຈະຖືກຈ່າຍໃຫ້ພະນັກງານສາຂາຜູ້ທີ່ບຳນານ ໂດຍພະແນກກອງທຶນສະຫວັດດີການສັງຄົມເຊິ່ງຂຶ້ນກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ. ສາຂາໄດ້ຖືກກຳນົດໃຫ້ປະກອບສ່ວນເຂົ້າໃນຜົນປະໂຫຍດຫຼັງອອກການຂອງພະນັກງານ ໂດຍການຈ່າຍເງິນເຂົ້າປະກັນສັງຄົມໃນອັດຕາ 6.00% ຂອງເງິນເດືອນພື້ນຖານຂອງພະນັກງານ ທຸກໆເດືອນ. ສາຂາບໍ່ມີພັນທະອື່ນອີກນອກຈາກຜົນປະໂຫຍດນີ້ໃຫ້ກັບພະນັກງານຫຼັງອອກການ.

*ຜົນປະໂຫຍດຈາກການຍົກເລີກສັນຍາ*

ອີງຕາມມາດຕາ 82 ຂອງກົດໝາຍວ່າດ້ວຍແຮງງານ ສະບັບປັບປຸງເລກທີ 43/ສພຊ ທີ່ອະນຸມັດໂດຍປະທານປະເທດຂອງ ສປປ ລາວ ໃນວັນທີ 28 ມັງກອນປີ 2014, ສາຂາມີພັນທະຈ່າຍເງິນຊົດເຊີຍໃຫ້ພະນັກງານຜູ້ທີ່ຖືກເລີກຈ້າງຍ້ອນກໍລະນີດັ່ງລຸ່ມນີ້:

- ເມື່ອພະນັກງານຂາດທັກສະຄວາມຊ່ຽວຊານ ຫຼື ບໍ່ມີສຸຂະພາບແຂງແຮງດັ່ງນັ້ນຈຶ່ງບໍ່ສາມາດສືບຕໍ່ເຮັດວຽກໄດ້;
- ເມື່ອນາຍຈ້າງຫາກໄດ້ພິຈາລະນາວ່າມີຄວາມຈຳເປັນຈະຕ້ອງໄດ້ຫລຸດຈຳນວນພະນັກງານລົງເພື່ອປັບປຸງໂຄງສ້າງວຽກງານພາຍໃນໜ່ວຍງານ.

ສຳລັບການຍົກເລີກສັນຍາຈ້າງງານໃນຂົງເຂດທີ່ກ່າວມາຂ້າງເທິງ. ນາຍຈ້າງຕ້ອງຈ່າຍເງິນເບ້ຍລ້ຽງໃຫ້ພະນັກງານໂດຍອີງໃສ່ພື້ນຖານການຄິດໄລ່ 10% ຂອງເງິນເດືອນພື້ນຖານທີ່ໄດ້ຮັບກ່ອນການເລີກຈ້າງ ສຳລັບພະນັກງານທີ່ເຮັດວຽກຕ່ຳກວ່າ 3 ປີ. ນະວັນທີ 31 ທັນວາ 2020, ບໍ່ມີພະນັກງານທະນາຄານຖືກຢຸດຈ້າງຕາມເງື່ອນໄຂທີ່ລະບຸໄວ້ຂ້າງເທິງ. ດັ່ງນັ້ນ ສາຂາບໍ່ໄດ້ຫັກຄັງແຮສຳລັບການຍົກເລີກການຈ້າງດັ່ງກ່າວໃນເອກະສານລາຍງານການເງິນ.

**3. ລາຍຮັບສຸດທິດອກເບ້ຍແລະລາຍຮັບທີ່ຄ້າຍຄືກັນ**

| | *2020*<br>*ພັນກີບ* | *2019*<br>*ພັນກີບ* |
|---|---|---|
| **ລາຍຮັບດອກເບ້ຍ ແລະ ຄ້າຍຄືດອກເບ້ຍຈາກ:** | | |
| ທຸລະກຳລະຫວ່າງທະນາຄານ | 943,582 | 1,864,688 |
| ເງິນກູ້ໃຫ້ແກ່ລູກຄ້າ | 13,157,771 | 11,838,989 |
| | **14,101,353** | **13,703,677** |
| **ລາຍຈ່າຍດອກເບ້ຍ ແລະ ຄ້າຍຄືດອກເບ້ຍ:** | | |
| ທຸລະກຳລະຫວ່າງທະນາຄານ | (147,128) | (498,296) |
| ລູກຄ້າເງິນຝາກ | (6,530,263) | (7,321,760) |
| | **(6,677,391)** | **(7,820,056)** |
| **ລາຍຮັບສຸດທິຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍ** | **7,423,962** | **5,883,621** |

**4. ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່ານາຍໜ້າ**

| | *2020*<br>*ພັນກີບ* | *2019*<br>*ພັນກີບ* |
|---|---|---|
| **ລາຍຮັບຈາກຄ່າທຳນຽມ ແລະ ຄ່ານາຍໜ້າຈາກ:** | | |
| ກິດຈະກຳການຄ້າທາງການເງິນ | 421,478 | 892,536 |
| ກິດຈະກຳການຊຳລະສະສາງ | 168,706 | 191,685 |
| | **590,184** | **1,084,221** |
| **ລາຍຈ່າຍຈາກຄ່າທຳນຽມ ແລະ ຄ່ານາຍໜ້າສຳລັບ:** | | |
| ທຸລະກຳກັບລູກຄ້າ | (135,893) | (104,061) |
| | **(135,893)** | **(104,061)** |
| **ຄ່າທຳນຽມ ແລະ ຄ່ານາຍໜ້າສຸດທິ** | **454,291** | **980,160** |

**5. ລາຍຮັບອື່ນໆຈາກການດຳເນີນງານ**

| | *2020*<br>*ພັນກີບ* | *2019*<br>*ພັນກີບ* |
|---|---|---|
| ລາຍຮັບຈາກທຸລະກຳລະຫວ່າງທະນາຄານອື່ນ | 137,810 | 441,609 |
| ເກັບຄືນເງິນແຮສຳລັບເງິນກູ້ທີ່ເກີດດອກອອກຜົນ | 93,920 | - |
| ເກັບຄືນໜີ້ເສຍທີ່ຈິດລ້າງອອກ | 917,603 | 44,000 |
| ອື່ນໆ | 8,577 | 11,718 |
| | **1,157,910** | **497,327** |

## 6. ເງິນເດືອນ ແລະ ຄ່າໃຊ້ຈ່າຍອື່ນໆໃຫ້ແກ່ພະນັກງານ

| | 2020<br>*ພັນກີບ* | 2019<br>*ພັນກີບ* |
|---|---|---|
| ຄ່າແຮງງານ ແລະ ເງິນອຸດໜູນ | 5,029,192 | 4,522,150 |
| ລາຍຈ່າຍອື່ນໆກ່ຽວກັບພະນັກງານ | 162,727 | 209,628 |
| | **5,191,919** | **4,731,778** |

## 7. ລາຍຈ່າຍບໍລິຫານອື່ນໆ

| | 2020<br>*ພັນກີບ* | 2019<br>*ພັນກີບ* |
|---|---|---|
| ຄ່າເຊົ່າຫ້ອງການ | 209,915 | 189,519 |
| ຄ່ານ້ຳມັນ | 16,342 | 59,925 |
| ຄ່າເຄື່ອງໃຊ້ຫ້ອງການ | 123,552 | 127,996 |
| ຄ່າໂຄສະນາ, ການຕະຫຼາດ ແລະ ການສົ່ງເສີມການຂາຍ | 4,282 | 16,713 |
| ຄ່າໂທລະຄົມມະນາຄົມ | 153,970 | 77,084 |
| ຄ່າສ້ອມແປງ ແລະ ບຳລຸງຮັກສາ | 1,711,240 | 1,207,130 |
| ຄ່າໄຟຟ້າ ແລະ ນ້ຳປະປາ | 157,714 | 126,300 |
| ຄ່າຜູ້ຊ່ຽວຊານ | 326,868 | 387,725 |
| ຄ່າຮັບແຂກ | 489 | 4,138 |
| ຄ່າປະກັນໄພ | 86,962 | 68,460 |
| ຄ່າໃຊ້ຈ່າຍພາຍໃນຫ້ອງການ | 162,057 | 128,738 |
| ຄ່າທີ່ປຶກສາ | 168,581 | 605,009 |
| ຄ່າໃຊ້ຈ່າຍອື່ນໆ | 8,216 | 11,128 |
| | **3,130,188** | **3,009,865** |

## 8. ລາຍຈ່າຍອື່ນໆຈາກການດຳເນີນງານ

| | 2020<br>*ພັນກີບ* | 2019<br>*ພັນກີບ* |
|---|---|---|
| ລາຍຈ່າຍເງິນແຮສຳລັບເງິນກູ້ທີ່ເກີດດອກອອກຜົນ | - | 32,528 |
| ຄ່າປະກັນເງິນຝາກໃຫ້ກັບກອງທຶນປົກປ້ອງຜູ້ຝາກເງິນ | 183,156 | 162,113 |
| | **183,156** | **194,641** |

## 9. ເງິນສົດໃນຄັງ

| | 31/12/2020<br>*ພັນກີບ* | 31/12/2019<br>*ພັນກີບ* |
|---|---:|---:|
| ເງິນສົດໃນຄັງທີ່ເປັນເງິນກີບ | 1,564,121 | 780,334 |
| ເງິນສົດໃນຄັງທີ່ເປັນເງິນຕາຕ່າງປະເທດ | 3,864,525 | 2,185,373 |
| | **5,428,646** | **2,965,707** |

## 10. ເງິນຝາກຢູ່ ທຫລ

| | 31/12/2020<br>*ພັນກີບ* | 31/12/2019<br>*ພັນກີບ* |
|---|---:|---:|
| ເງິນຝາກກະແສລາຍວັນ | 85,304,007 | 134,723,177 |
| ເງິນແຮຝາກບັງຄັບ | 8,741,031 | 12,547,466 |
| ເງິນຝາກຄ້ຳປະກັນທຶນຈົດທະບຽນ | 36,454,229 | 11,422,500 |
| | **130,499,267** | **158,693,143** |

ເງິນຝາກຢູ່ ທຫລ ລວມມີ ເງິນຝາກກະແສລາຍວັນ, ເງິນແຮຝາກບັງຄັບ ແລະ ເງິນຝາກຄ້ຳປະກັນທຶນຈົດທະບຽນ. ເງິນຝາກດັ່ງກ່າວແມ່ນບໍ່ມີດອກເບ້ຍ.

ຕາມຂໍ້ກຳນົດຂອງ ທຫລ, ສາຂາໄດ້ຖືກຮຽກຮ້ອງໃຫ້ຮັກສາຄັງເງິນສົດໄວ້ກັບ ທຫລ ໃນຮູບແບບເງິນຝາກແຮບັງຄັບ, ເຊິ່ງຖືກຄິດໄລ່ໃນອັດຕາ 4.00% ສຳລັບເງິນກີບ ແລະ 8.00% ສຳລັບເງິນຕາຕ່າງປະເທດ, ຄິດໄລ່ 2 ຄັ້ງຕໍ່ເດືອນ, (2019: 5.00% ແລະ 10.00%) ຂອງຍອດເງິນຝາກຂອງລູກຄ້າເຊິ່ງມີກຳນົດຕ່ຳກວ່າ 12 ເດືອນ. ພາຍໃນປີ, ສາຂາຮັກສາເງິນແຮຝາກບັງຄັບຕາມຂໍ້ຕົກລົງຂອງທະນາຄານແຫ່ງ ສປປ ລາວ.

ຕາມຂໍ້ກຳນົດຂອງດຳລັດເລກທີ 02/ນຍ ຂອງ ທຫລ, ທະນາຄານສາຂາຕ່າງປະເທດຕ້ອງຮັກສາຍອດເງິນຝາກຂັ້ນຕ່ຳຂອງເງິນຝາກພິເສດກັບ ທຫລ ເຊິ່ງທຽບເທົ່າ 25% ຂອງທຶນຈົດທະບຽນທີ່ຖອກແລ້ວເພື່ອຮັບປະກັນຄວາມສືບເນື່ອງໃນການດຳເນີນງານ. ນະວັນທີ 31 ທັນວາ 2020, ຍອດເງິນໃນບັນຊີເງິນຝາກຄ້ຳປະກັນທຶນຈົດທະບຽນຂອງສາຂາ ແມ່ນ 36,454,229 ກີບ ເຊິ່ງທຽບເທົ່າ 3,931,647 ໂດລາ.

## 11. ເງິນຝາກກັບທະນາຄານອື່ນ

### *11.1 ເງິນຝາກກະແສລາຍວັນ*

| | *31/12/2020 ພັນກີບ* | *31/12/2019 ພັນກີບ* |
|---|---|---|
| ເງິນຝາກກັບທະນາຄານພາຍໃນປະເທດ | **951,353** | **13,256,112** |
| ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ | 951,353 | 13,256,112 |
| ເງິນຝາກກັບທະນາຄານຕ່າງປະເທດ | **137,736,987** | **52,144,728** |
| ທະນາຄານ ກຸງເທບຈຳກັດ ມະຫາຊົນ | 1,061,794 | 1,878,110 |
| ທະນາຄານ ເມແບັງ – ສາຂາ ນິວຢອກ | 136,675,193 | 50,266,618 |
| | **138,688,340** | **65,400,840** |

### *11.2 ເງິນຝາກມີກຳນົດ*

| | *31/12/2020 ພັນກີບ* | *31/12/2019 ພັນກີບ* |
|---|---|---|
| ເງິນຝາກກັບທະນາຄານຕ່າງປະເທດ | **70,467,200** | **88,600,000** |
| ທະນາຄານ ເມແບັງ - ສຳນັກງານໃຫຍ່ | 70,467,200 | 88,600,000 |
| | **70,467,200** | **88,600,000** |

ເງິນຝາກມີກຳນົດຢູ່ທະນາຄານ ເມແບັງ - ສຳນັກງານໃຫຍ່ ແມ່ນມີກຳນົດເວລາ 3 ເດືອນ ແລະ ໄດ້ຮັບດອກເບ້ຍໃນອັດຕາ 0.11% ຫາ 2.05% ຕໍ່ປີ.

## 12. ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ, ຫຼັງຫັກເງິນແຮສະເພາະສຳລັບກິດຈະກຳສິນເຊື່ອສຸດທິ

| | *31/12/2020*<br>*ພັນກີບ* | *31/12/2019*<br>*ພັນກີບ* |
|---|---|---|
| ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ | 156,908,807 | 139,903,791 |
| *ລວມມີ:* | | |
| *ເງິນກູ້ໃຫ້ສະຖາບັນການເງິນ* | *32,686,470* | *40,340,541* |
| *ອື່ນໆ* | *124,222,337* | *99,563,250* |
| ຫັກເງິນແຮສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ *(ບົດອະທິບາຍເລກທີ 12.2)* | (881,047) | (1,858,353) |
| *ລວມມີ:* | | |
| *ເງິນແຮສະເພາະສຳລັບໜີ້ຄວນເອົາໃຈໃສ່* | *(36,657)* | *(16,636)* |
| *ເງິນແຮສະເພາະສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ* | *(844,390)* | *(1,841,717)* |
| | **156,027,760** | **138,045,438** |

| | *2020*<br>*ອັດຕາດອກເບ້ຍ*<br>*% ຕໍ່ປີ* | *2019*<br>*ອັດຕາດອກເບ້ຍ*<br>*% ຕໍ່ປີ* |
|---|---|---|
| ເງິນກູ້ ແລະ ເງິນລ່ວງໜ້າທີ່ເປັນເງິນກີບ | 3.50 - 12.00 | 3.00% - 11.00% |
| ເງິນກູ້ ແລະ ເງິນລ່ວງໜ້າທີ່ເປັນເງິນໂດລາ | 4.65 - 11.00 | 2.00% - 11.00% |
| ເງິນກູ້ ແລະ ເງິນລ່ວງໜ້າທີ່ເປັນເງິນບາດ | 6.25 - 9.25 | 6.25% - 8.00% |

### 12.1 *ການວິເຄາະເງິນກູ້ໃຫ້ກັບລູກຄ້າ*

*ວິເຄາະຕາມສະກຸນເງິນ*

| | *31/12/2020*<br>*ພັນກີບ* | *31/12/2019*<br>*ພັນກີບ* |
|---|---|---|
| ເງິນກູ້ ແລະ ເງິນລ່ວງໜ້າທີ່ເປັນເງິນກີບ | 94,576,917 | 68,105,989 |
| ເງິນກູ້ ແລະ ເງິນລ່ວງໜ້າທີ່ເປັນເງິນໂດລາ | 39,510,540 | 52,575,000 |
| ເງິນກູ້ ແລະ ເງິນລ່ວງໜ້າທີ່ເປັນເງິນບາດ | 22,821,350 | 19,222,802 |
| | **156,908,807** | **139,903,791** |

## 12. ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ, ຫຼັງຫັກເງິນແຮສະເພາະສຳລັບກິດຈະກຳສິນເຊື່ອສຸດທິ (ຕໍ່)

### 12.1 *ການວິເຄາະເງິນກູ້ໃຫ້ກັບລູກຄ້າ* (ຕໍ່)

*ວິເຄາະຕາມສະຖານະຂອງເງິນກູ້*

| | *31/12/2020* *ພັນກີບ* | *31/12/2019* *ພັນກີບ* |
|---|---|---|
| ເງິນກູ້ທີ່ເກີດດອກອອກຜົນ | 154,986,055 | 136,101,591 |
| ເງິນກູ້ທີ່ບໍ່ເກີດດອກອອກຜົນ | 1,922,752 | 3,802,200 |
| | **156,908,807** | **139,903,791** |

*ວິເຄາະຕາມໄລຍະເວລາກູ້ຢືມ*

| | *31/12/2020* *ພັນກີບ* | *31/12/2019* *ພັນກີບ* |
|---|---|---|
| ເງິນກູ້ໄລຍະສັ້ນ | 93,962,491 | 95,774,918 |
| ເງິນກູ້ໄລຍະກາງ | 6,518,642 | 13,135,696 |
| ເງິນູ້ໄລຍະຍາວ | 56,427,674 | 30,993,177 |
| | **156,908,807** | **139,903,791** |

*ການວິເຄາະຈາກຂະແໜງເສດຖະກິດ*

| | *31/12/2020* *ພັນກີບ* | *31/12/2019* *ພັນກີບ* |
|---|---|---|
| ຂະແໜງກໍ່ສ້າງ | 1,608,899 | 1,215,804 |
| ຂະແໜງການຄ້າ | 69,463,864 | 53,332,597 |
| ຂະແໜງການບໍລິການ | 58,045,213 | 56,535,775 |
| ຂະແໜງຫັດຖະກຳ | 131,503 | 292,014 |
| ຂະແໜງການອື່ນໆ | 27,659,328 | 28,527,601 |
| | **156,908,807** | **139,903,791** |

**12.** **ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ, ຫຼັງຫັກເງິນແຮສະເພາະສຳລັບກິດຈະກຳສິນເຊື່ອສຸດທິ (ຕໍ່)**

**12.2** ***ສ່ວນປ່ຽນແປງຂອງເງິນແຮສຳລັບການສູນເສຍເງິນກູ້***

ການເຄື່ອນໄຫວຂອງເງິນແຮສຳລັບການສູນເສຍເງິນກູ້ຂອງສາຂາໃນໄລຍະປີສິ້ນສຸດ 31 ທັນວາ 2020 ມີດັ່ງນີ້:

| | *ເງິນແຮສະເພາະສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ ("NPL")* | *ເງິນແຮສຳລັບໜີ້ຄວນເອົາໃຈໃສ່* | *ເງິນແຮທົ່ວໄປສຳລັບເງິນກູ້ທີ່ເກີດດອກອອກຜົນ ("PL")* | *ລວມ* |
|---|---|---|---|---|
| | *ພັນກີບ* | *ພັນກີບ* | *ພັນກີບ* | *ພັນກີບ* |
| **ຍອດເຫຼືອເງິນກູ້ນະວັນທີ 31 ທັນວາ 2019** | **1,841,717** | **16,636** | **677,735** | **2,536,088** |
| ຍອດຍົກມາຈາກທະນາຄານ ເມແບັງ ສາຂາ ໜອງດ້ວງ | 321,057 | - | 179,196 | 500,253 |
| ເງິນແຮທີ່ຫັກເປັນລາຍຈ່າຍພາຍໃນປີ | 3,337,620 | 13,055 | (106,975) | 3,243,700 |
| ໜີ້ເສຍທີ່ລ້າງອອກພາຍໃນປີ | (4,63,039) | - | - | (4,635,039) |
| ສ່ວນຜິດດ່ຽງໃນອັດຕາແລກປ່ຽນ | (20,965) | 6,966 | 18,865 | 4,866 |
| **ຍອດເຫຼືອເງິນກູ້ນະວັນທີ 31 ທັນວາ 2020** | **844,390** | **36,657** | **768,821** | **1,649,868** |

*ລາຍລະອຽດຂອງການຈັດຊັ້ນເງິນກູ້ ແລະ ເງິນແຮ ນະວັນທີ 31 ທັນວາ 2020 ມີດັ່ງຕໍ່ໄປນີ້:*

| *ການຈັດປະເພດ* | *ຍອດເຫຼືອເງິນກູ້ ພັນກີບ* | *ເງິນແຮສະເພາະ ພັນກີບ* | *ເງິນແຮທົ່ວໄປ ພັນກີບ* | *ລວມ ພັນກີບ* |
|---|---|---|---|---|
| ໜີ້ປົກກະຕິ | 153,764,153 | - | 768,821 | 768,821 |
| ໜີ້ຄວນເອົາໃຈໃສ່ | 1,221,902 | 36,657 | - | 36,657 |
| ໜີ້ຕໍ່າກວ່າມາດຕະຖານ | 389,964 | 77,991 | - | 77,991 |
| ໜີ້ສົງໄສ | 1,532,798 | 766,399 | - | 766,399 |
| ໜີ້ສູນ | - | - | - | - |
| **ລວມ** | **156,908,807** | **881,047** | **768,821** | **1,649,868** |

## 13. ຊັບສິນບັດຄົງທີ່

### *13.1 ຊັບສິນບັດຄົງທີ່ມີຕົວຕົນ*

ການເຄື່ອນໄຫວຂອງຊັບສິນບັດຄົງທີ່ມີຕົວຕົນພາຍໃນປີສິ້ນສຸດວັນທີ 31 ທັນວາ 2020 ມີດັ່ງນີ້:

| | *ອາຄານ ແລະ ການປັບປຸງ ພັນກີບ* | *ອຸປະກອນຫ້ອງການ ພັນກີບ* | *ເຟີນີເຈີ ແລະ ສິ່ງຕິດຕັ້ງ ພັນກີບ* | *ອຸປະກອນຄອມພິວເຕີ ພັນກີບ* | *ພາຫະນະ ພັນກີບ* | *ລວມ ພັນກີບ* |
|---|---|---|---|---|---|---|
| **ຕົ້ນທຶນ:** | | | | | | |
| ນະວັນທີ 31 ທັນວາ 2019 | 6,928,381 | 510,159 | 180,733 | 1,553,331 | 855,971 | 10,028,575 |
| ຍອດຍົກມາຈາກສາຂາ ໜອງດວງ | 4,644,183 | 314,389 | 669,207 | 1,231,827 | - | 6,859,606 |
| ຊື້ເພີ່ມພາຍໃນປີ | - | - | - | 30,799 | - | 30799 |
| ນະວັນທີ 31 ທັນວາ 2020 | 11,572,564 | 824,548 | 849,940 | 2,815,957 | 855,971 | 16,918,980 |
| **ຄ່າຫຼຸ້ຍຫ້ຽນສະສົມ:** | | | | | | |
| ນະວັນທີ 31 ທັນວາ 2019 | 4,923,296 | 454,919 | 120,720 | 1,423,856 | 855,971 | 7,778,762 |
| ຍອດຍົກມາຈາກສາຂາ ໜອງດ້ວງ | 4,644,183 | 314,389 | 669,207 | 1,231,827 | - | 6,859,606 |
| ຄ່າຫຼຸ້ຍຫ້ຽນພາຍໃນປີ | 692,840 | 26,338 | 14,665 | 31,565 | - | 765,408 |
| ນະວັນທີ 31 ທັນວາ 2020 | 10,260,319 | 795,646 | 804,592 | 2,687,248 | 855,971 | 15,403,776 |
| **ມູນຄ່າສຸດທິຕາມບັນຊີ:** | | | | | | |
| ນະວັນທີ 31 ທັນວາ 2019 | 2,005,085 | 55,240 | 60,013 | 129,475 | - | 2,249,813 |
| ນະວັນທີ 31 ທັນວາ 2020 | 1,312,245 | 28,902 | 45,348 | 128,709 | - | 1,515,204 |

## 13. ຊັບສົມບັດຄົງທີ່ ແລະ ສິດນຳໃຊ້ຊັບສິນ(ຕໍ່)

### *13.2 ຊັບສົມບັດຄົງທີ່ບໍ່ມີຕົວຕົນ*

ການເຄື່ອນໄຫວຂອງຊັບສົມບັດຄົງທີ່ບໍ່ມີຕົວຕົນພາຍໃນປີສິ້ນສຸດວັນທີ 31 ທັນວາ 2020 ມີດັ່ງລຸ່ມນີ້:

| | *ຄອມພິວເຕີ ຊັອບແວ*<br>*ພັນກີບ* |
|---|---|
| ຕົ້ນທຶນ: | |
| ນະວັນທີ 31 ທັນວາ 2019 | 339,555 |
| ຍອດຍົກມາຈາກສາຂາ ໜອງດ້ວງ | 1,378,559 |
| ຊື້ເພີ່ມພາຍໃນປີ | 76,076 |
| ນະວັນທີ 31 ທັນວາ 2020 | 1,794,190 |
| ຄ່າເສື່ອມສະສົມ: | |
| ນະວັນທີ 31 ທັນວາ 2019 | 265,544 |
| ຍອດຍົກມາຈາກສາຂາ ໜອງດ້ວງ | 1,378,559 |
| ຄ່າເສື່ອມພາຍໃນປີ | 20,674 |
| ນະວັນທີ 31 ທັນວາ 2020 | 1,664,777 |
| ມູນຄ່າສຸດທິ: | |
| ນະວັນທີ 1 ທັນວາ 2019 | 74,011 |
| ນະວັນທີ 31 ທັນວາ 2020 | 129,413 |

### *13.3 ຊັບສົມບັດພວມດຳເນີນງານ*

| | *31/12/2020*<br>*ພັນກີບ* | *31/12/2019*<br>*ພັນກີບ* |
|---|---|---|
| ຊັບສົມບັດຄົງທີ່ມີຕົວຕົນ | 556,134 | - |
| ຊັບສົມບັດຄົງທີ່ບໍ່ມີຕົວຕົນ | 199,154 | 179,048 |
| | **755,288** | **179,048** |

## 13. ຊັບສິນບັດຄົງທີ່ ແລະ ສິດນຳໃຊ້ຊັບສິນ (ຕໍ່)

### *13.4 ສິດນຳໃຊ້ຊັບສິນ*

| | *ສິດໃນການນຳໃຊ້ຊັບສິນ ຊັບສິນ ພັນກີບ* |
|---|---|
| **ຕົ້ນທຶນ:** | |
| ນະວັນທີ 1 ມັງກອນ 2020 | 8,064,476 |
| ຊື້ເພີ່ມໃນປີ | 3,421,340 |
| ນະວັນທີ 31 ທັນວາ 2020 | 11,485,816 |
| **ຄ່າຫຼຸ້ຍຫ້ຽນສະສົມ:** | |
| ນະວັນທີ 1 ມັງກອນ 2020 | 1,600,869 |
| ຄ່າຫຼຸ້ຍຫ້ຽນພາຍໃນປີ | 1,181,717 |
| ນະວັນທີ 31 ທັນວາ 2020 | 2,782,586 |
| **ມູນຄ່າສຸດທິຕາມບັນຊີ:** | |
| ນະວັນທີ 1 ມັງກອນ 2020 | 6,463,607 |
| ນະວັນທີ 31 ທັນວາ 2020 | 8,703,230 |

ການກຳນົດໄວ້ຂ້າງລຸ່ມນີ້ແມ່ນຈຳນວນຍອດຍົກມາຂອງພັນທະໜີ້ສິນຂອງສັນຍາເຊົ່າຊື້ (ໄດ້ລວມຢູ່ພາຍໃຕ້ 'ໜີ້ສິນອື່ນໆ'ທີ່ຕ້ອງຊຳລະໃນ (ບົດອະທິບາຍຊ້ອນທ້າຍ ເລກທີ18) ແລະ ການເຄື່ອນໄຫວສຳລັບປີສິ້ນສຸດ:

| | *2020 ພັນກີບ* | *2019 ພັນກີບ* |
|---|---|---|
| **ນະວັນທີ 1 ມັງກອນ** | **4,053,827** | **-** |
| ຊື້ເພີ່ມໃນປີ | 3,058,129 | 6,629,156 |
| ລາຍຮັບຈາກດອກເບ້ຍ | 209,915 | 231,519 |
| ໜີ້ຕ້ອງສົ່ງ | (554,700) | (2,806,848) |
| ສ່ວນຜິດດ່ຽງໃນອັດຕາແລກປ່ຽນ | 176,154 | - |
| **ນະວັນທີ 31 ທັນວາ** | **6,943,325** | **4,053,827** |

## 14. ຊັບສິນອື່ນໆ

| | *31/12/2020* *ພັນກີບ* | *31/12/2019* *ພັນກີບ* |
|---|---|---|
| ລາຍຈ່າຍລ່ວງໜ້າລໍຖ້າການແບ່ງສ່ວນ | 110,743 | 68,188 |
| ອາກອນກຳໄລຈ່າຍລ່ວງໜ້າ (ບົດອະທິບາຍເລກທີ 17.2) | 4,065,324 | 4,065,324 |
| ຊັບສິນລໍຖ້າ | 629 | 32,933 |
| ຊັບສິນອື່ນໆ | 253,088 | 277,271 |
| | **4,429,784** | **4,443,716** |

## 15. ໜີ້ຕ້ອງສົ່ງທະນາຄານ

### *15.1 ເງິນຝາກກະແສລາຍວັນ*

| | *31/12/2020* *ພັນກີບ* | *31/12/2019* *ພັນກີບ* |
|---|---|---|
| **ຍອດເຫຼືອຂອງທະນາຄານຕ່າງປະເທດ** | **135,704,472** | **118,115,300** |
| ທະນາຄານ ເມແບັງ, ສຳນັກງານໃຫຍ່ | 135,704,472 | 118,115,300 |
| **ຍອດເຫຼືອຂອງທະນາຄານພາຍໃນປະເທດ** | **-** | **30,927,067** |
| ທະນາຄານ ເມແບັງ – ສາຂາ ໜອງດ້ວງ | - | 30,927,067 |
| | **135,704,472** | **149,042,367** |

### 15.2 ເງິນຝາກມີກຳນົດ

| | *31/12/2020* *ພັນກີບ* | *31/12/2019* *ພັນກີບ* |
|---|---|---|
| **ຍອດເຫຼືອຂອງທະນາຄານພາຍໃນປະເທດ** | | |
| ທະນາຄານ ກຸງເທບຈຳກັດ ມະຫາຊົນ - ສາຂາ ນະຄອນຫຼວງວຽງຈັນ | - | 15,794,000 |
| ທະນາຄານ ກະສິກອນໄທ ຈຳກັດ | 987,300 | - |
| | **987,300** | **15,794,000** |

ເງິນຝາກມີກຳນົດຈາກທະນາຄານ ກະສິກອນໄທ ຈຳກັດແມ່ນເງິນຝາກທີ່ເປັນສະກຸນເງິນບາດ, ມີກຳນົດ 3 ເດືອນ ແລະ ມີອັດຕາດອກເບ້ຍ 3.00% ຕໍ່ປີ.

## 16. ໜີ້ຕ້ອງສົ່ງໃຫ້ລູກຄ້າ

ລາຍລະອຽດຂອງມູນຄ່າໜີ້ຕ້ອງສົ່ງໃຫ້ລູກຄ້າ ນະວັນທີ 31 ທັນວາ 2020 ມີດັ່ງນີ້:

| | *31/12/2020* *ພັນກີບ* | *31/12/2019* *ພັນກີບ* |
|---|---|---|
| **ເງິນຝາກກະແສລາຍວັນ** | **22,774,829** | **23,182,741** |
| - ສະກຸນເງິນກີບ | 6,331,721 | 3,750,491 |
| - ສະກຸນເງິນຕາຕ່າງປະເທດ | 16,443,108 | 19,432,250 |
| **ເງິນຝາກປະຢັດ** | **27,303,180** | **19,009,546** |
| - ສະກຸນເງິນກີບ | 27,303,180 | 19,009,546 |
| - ສະກຸນເງິນຕາຕ່າງປະເທດ | - | - |
| **ເງິນຝາກມີກໍານົດ** | **148,710,671** | **154,003,164** |
| - ສະກຸນເງິນກີບ | 144,816,431 | 153,993,466 |
| - ສະກຸນເງິນຕາຕ່າງປະເທດ | 3,894,240 | 9,698 |
| **ໜີ້ຕ້ອງສົ່ງອື່ນໆ** | **132,272** | **3,099,753** |
| - ສະກຸນເງິນກີບ | 132,272 | 55,640 |
| - ສະກຸນເງິນຕາຕ່າງປະເທດ | - | 3,044,113 |
| | **198,920,952** | **199,295,204** |

ອັດຕາດອກເບ້ຍໜີ້ຕ້ອງສົ່ງລູກຄ້າມີດັ່ງຕໍ່ໄປນີ້:

| | *2020* *ອັດຕາດອກເບ້ຍຕໍ່ປີ* | *2019* *ອັດຕາດອກເບ້ຍຕໍ່ປີ* |
|---|---|---|
| ເງິນຝາກກະແສລາຍວັນສະກຸນເງິນກີບ | ບໍ່ມີດອກເບ້ຍ | ບໍ່ມີດອກເບ້ຍ |
| ເງິນຝາກກະແສລາຍວັນສະກຸນເງິນຕາຕ່າງປະເທດ | ບໍ່ມີດອກເບ້ຍ | ບໍ່ມີດອກເບ້ຍ |
| ເງິນຝາກປະຢັດສະກຸນເງິນກີບ | 1.89% | 1.89% |
| ເງິນຝາກປະຢັດສະກຸນເງິນໂດລາ | 1.75% | 1.75% |
| ເງິນຝາກປະຢັດສະກຸນເງິນບາດ | 1.75% | 1.75% |
| ເງິນຝາກມີກໍານົດສະກຸນເງິນກີບ | 3.16 - 6.77% | 3.16% - 6.77% |
| ເງິນຝາກມີກໍານົດສະກຸນເງິນຕາຕ່າງປະເທດ | 2.65 - 5.00% | 3.00% - 5.00% |

## 17. ອາກອນ

### 17.1 *ອາກອນຕ້ອງສົ່ງ*

| | *31/12/2020 ພັນກີບ* | *31/12/2019 ພັນກີບ* |
|---|---|---|
| ອາກອນຫັກຈາກພາກສ່ວນອື່ນ | 44,914 | 2,969 |
| | **44,914** | **2,969** |

### 17.2 *ອາກອນຈ່າຍລ່ວງໜ້າ*

| | *31/12/2020 ພັນກີບ* | *31/12/2019 ພັນກີບ* |
|---|---|---|
| ອາກອນກຳໄລຈ່າຍລ່ວງໜ້າ | (4,065,324) | (4,065,324) |
| | **(4,065,324)** | **(4,065,324)** |

### 17.3 *ອາກອນກຳໄລ*

ຄັງແຮ ແມ່ນຖືກສ້າງຂຶ້ນສຳລັບອາກອນກຳໄລຕາມກຳໄລຂອງປີປັດຈຸບັນ, ໂດຍອີງຕາມກົດໝາຍສ່ວຍສາອາກອນວ່າດ້ວຍການເກັບອາກອນພາຍໃນ ສປປ ລາວ. ສາຂາມີພັນທະຕ້ອງຈ່າຍອາກອນໃນອັດຕາ 20% ຂອງກຳໄລທັງໝົດກ່ອນຫັກອາກອນ ໂດຍອີງຕາມກົດໝາຍສ່ວຍອາກອນສະບັບປັບປຸງເລກທີ 67/ສພຊ ລົງວັນທີ 18 ມິຖຸນາ 2019 ເຊິ່ງມີຜົນສັກສິດຕັ້ງແຕ່ວັນທີ 1 ມັງກອນ 2020.

ລາຍລະອຽດຄັງແຮອາກອນກຳໄລສຳລັບປີ 2019 ແລະ 2020 ມີດັ່ງລຸ່ມນີ້:

| | *2020 ພັນກີບ* | *2019 ພັນກີບ* |
|---|---|---|
| ຂາດທຶນກ່ອນຫັກອາກອນຕາມລະບົບການບັນຊີລາວ | (3,412,690) | (7,902,795) |
| ຫັກ: ລາຍຮັບທີ່ບໍ່ຖືກເສຍອາກອນ | 1,361,830 | (1,126,171) |
| ບວກ: ລາຍການທີ່ບໍ່ໃຫ້ຖືເປັນລາຍຈ່າຍ | 77,651 | 6,875,399 |
| **ຂາດທຶນກ່ອນຫັກ** | **(4,696,869)** | **(2,153,567)** |
| ລາຍຈ່າຍອາກອນກຳໄລ 20% ຂອງລາຍໄດ້ທີ່ຕ້ອງເສຍອາກອນ (2019: 24%) | - | - |
| **ອາກອນກຳໄລຕ້ອງຈ່າຍໃນປີປັດຈຸບັນ** | - | - |
| ອາກອນກຳໄລ(ເກັບຄືນ)/ຕ້ອງຈ່າຍໃນຕົ້ນປີ | (4,065,324) | (4,065,324) |
| ອາກອນກຳໄລຈ່າຍພາຍໃນປີ | - | - |
| **ອາກອນກຳໄລເກັບຄືນທ້າຍປີ** | **(4,065,324)** | **(4,065,324)** |

## 17. ອາກອນ (ຕໍ່)

### 17.3 *ອາກອນກຳໄລ* (ຕໍ່)

ການແຈ້ງອາກອນຂອງສາຂາຕ້ອງໄດ້ຮັບການກວດກາໂດຍເຈົ້າໜ້າທີ່ສ່ວຍສາອາກອນ. ຍ້ອນວ່າການນຳໃຊ້ກົດໝາຍສ່ວຍສາອາກອນ ແລະ ລະບຽບການຕ່າງໆ ແມ່ນມີຫຼາຍປະເພດເຊິ່ງອາດຈະແປຄວາມໄດ້ເປັນຫລາຍຢ່າງ, ມູນຄ່າທີ່ໄດ້ຖືກລາຍງານຢູ່ໃນເອກະສານລາຍງານການເງິນອາດຈະມີການປັບແປງຂຶ້ນກັບການໄລ່ລຽງຂອງເຈົ້າໜ້າທີ່ສ່ວຍສາອາກອນ.

*ຂາດທຶນທາງອາກອນຍົກໄປທັກຕໍ່*

ການຂາດທຶນທາງອາກອນສຳລັບປີ 2020, ອີງຕາມກົດໝາຍສ່ວຍສາອາກອນສະບັບເລກທີ 64/ສພຊ ລົງວັນທີ 18 ມິຖຸນາ 2019, ມາດຕາ 23, ສຳລັບການຂາດທຶນປະຈຳປີທີ່ໄດ້ຮັບການຢັ້ງຢືນຈາກອີງການກວດສອບ ຫຼື ບໍລິສັດກວດສອບອິດສະຫຼະ ແລະ ຖືກຮັບຮູ້ຈາກເຈົ້າໜ້າທີ່ສວຍສາອາກອນ. ພາຍໃຕ້ກົດໝາຍອາກອນໃນປັດຈຸບັນ, ທະນາຄານມີສິດທີ່ຈະຍົກຍອດຂາດທຶນທາງອາກອນເພື່ອຫັກລົບກັບອາກອນກຳໄລຕ້ອງຈ່າຍທີ່ເກີດຂຶ້ນພາຍໃນ 5 ປີຫຼັງຈາກປີທີ່ເກີດການຂາດທຶນ.

ການຂາດທຶນຈາກອາກອນທີ່ເກີດຂຶ້ນໃນປີ 2019 ແລະ ປີຜ່ານມາ ທະນາຄານມີສິດທີ່ຈະຍົກຍອດຂາດທຶນທາງອາກອນເພື່ອຫັກລົບກັບອາກອນກຳໄລຕ້ອງຈ່າຍທີ່ເກີດຂຶ້ນພາຍໃນ 3 ປີຫຼັງຈາກປີທີ່ເກີດການຂາດທຶນ, ອີງຕາມກົດໝາຍອາກອນຜ່ານມາ.

ນະວັນທີຂອງເອກະສານລາຍງານການເງິນສະບັບນີ້, ສາຂາໄດ້ລວບລວມການຂາດທຶນສະສົມທາງອາກອນ 49,190,001 ພັນກີບ (31 ທັນວາ 2019: 44,522,132 ພັນກີບ) ສາມາດນຳຍົກຍົກຍອດຂາດທຶນທາງອາກອນເພື່ອຫັກລົບກັບອາກອນກຳໄລຕ້ອງມອບໃນອະນາຄົດ. ລາຍລະອຽດມີດັ່ງນີ້:

| *ປີ* | *ການຂາດທຶນໃນປີຜ່ານມາສາມາດຍົກໄປທັກຕໍ່*<br>*ພັນກີບ* | *ຂາດທຶນທາງອາກອນທີ່ເກີດຂຶ້ນ*<br>*ພັນກີບ* | *ນຳໃຊ້ພາຍໃນປີ*<br>*ພັນກີບ* | *ນຳໃຊ້ນະວັນທີບົດລາຍງານ*<br>*ພັນກີບ* |
|---|---|---|---|---|
| 2018 (*) | 2021 | (42,368,565) | - | (42,368,565) |
| 2019 (*) | 2022 | (2,153,567) | - | (2,153,567) |
| 2020 (*) | 2025 | (4,696,868 | - | (4,696,868) |
| | | **(49,219,000)** | **-** | |

(*) ນະວັນທີຂອງເອກະສານລາຍງານການເງິນເຫຼົ່ານີ້, ການໄລ່ລຽງອາກອນໄດ້ຖືກສະຫຼຸບສຳລັບປີທີ່ສຸດວັນທີ 31 ທັນວາ 2018, 31 ທັນວາ 2019 ແລະ 31 ທັນວາ 2020 ຍັງບໍ່ທັນໄດ້ຖືກສະຫຼຸບຈາກເຈົ້າໜ້າທີ່ສ່ວຍສາອາກອນ.

## 18. ໜີ້ຕ້ອງສົ່ງອື່ນໆ

| | *31/12/2020*<br>*ພັນກີບ* | *31/12/2019*<br>*ພັນກີບ* |
|---|---|---|
| ໜີ້ທີ່ຕ້ອງສົ່ງໃຫ້ພາກສ່ວນພາຍນອກ | 813,553 | 346,006 |
| ໜີ້ຕ້ອງສົ່ງໃຫ້ກັບພະນັກງານ | 414,206 | 572,999 |
| ໜີ້ຕ້ອງສົ່ງອື່ນໆ | 30,206 | 83,017 |
| ໜີ້ຕາມສັນຍາເຊົ່າ | 6,943,325 | 4,053,827 |
| | **8,201,290** | **5,055,849** |

## 19. ທຶນຈົດທະບຽນທີ່ຖອກແລ້ວ

ການເຄື່ອນໄຫວຂອງທຶນຈົດທະບຽນທີ່ຖອກແລ້ວພາຍໃນປີແມ່ນມີດັ່ງລຸ່ມນີ້:

| | *2020* | *2019* |
|---|---|---|
| | *ພັນກີບ* | *ພັນກີບ* |
| ຍອດຍົກມາ | 100,661,400 | 100,661,400 |
| ຍອດຍົກມາຈາກສາຂາ ໜອງດ້ວງ | 100,121,729 | - |
| **ຍອດເຫຼືອທ້າຍປີ** | **200,783,129** | **100,661,400** |

## 20. ເງິນສົດ ແລະ ທຽບເທົ່າເງິນສົດ

| | *31/12/2020* | *31/12/2019* |
|---|---|---|
| | *ພັນກີບ* | *ພັນກີບ* |
| ເງິນສົດໃນຄັງ | 5,428,646 | 2,965,707 |
| ເງິນຝາກກະແສລາຍວັນຢູ່ ທຫລ | 85,304,007 | 134,723,177 |
| ເງິນຝາກກະແສລາຍວັນຢູ່ ທະນາຄານອື່ນ | 138,688,340 | 65,400,840 |
| | **229,420,993** | **203,089,724** |

## 21. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວກັບພາກສ່ວນອື່ນທີ່ກ່ຽວຂ້ອງ ແມ່ນລວມທຸກລາຍການເຄື່ອນໄຫວທີ່ໄດ້ດຳເນີນງານກັບພາກສ່ວນອື່ນ ເຊິ່ງມີສາຍພົວພັນກັບສາຂາ. ພາກສ່ວນດັ່ງກ່າວແມ່ນຈະມີສ່ວນກ່ຽວຂ້ອງກັບສາຂາຖ້າວ່າ :

(ກ) ແບບທາງກົງ ຫຼື ແບບທາງອ້ອມ ໂດຍຜ່ານໜຶ່ງ ຫຼື ຫຼາຍສື່ກາງ, ເຊິ່ງພາກສ່ວນດັ່ງກ່າວ:

- ມີການຄວບຄຸມ, ຖືກຄວບຄຸມໂດຍ ຫຼື ພາຍໃຕ້ການຄວບຄຸມໂດຍທະນາຄານ (ໃນນີ້ລວມມີ ທະນາຄານສຳນັກງານໃຫຍ່, ສາຂາ ແລະ ສະມາຊິກຂອງສາຂາ)
- ມີຜົນປະໂຫຍດນຳກັນກັບສາຂາ ເຊິ່ງມີອິດທິພົນທີ່ສຳຄັນຕໍ່ກັບສາຂາ; ຫຼື
- ມີສ່ວນຮ່ວມໃນການຄວບຄຸມສາຂາ;

(ຂ) ພາກສ່ວນດັ່ງກ່າວແມ່ນມີຮຸ້ນສ່ວນນຳສາຂາ;

(ຄ) ພາກສ່ວນທີ່ກ່ຽວຂ້ອງແມ່ນສະມາຊິກຄົນສຳຄັນຂອງ ຜູ້ບໍລິຫານຫຼັກຂອງສາຂາ ຫຼື ທະນາຄານສຳນັກງານໃຫຍ່;

(ງ) ພາກສ່ວນທີ່ກ່ຽວຂ້ອງແມ່ນສະມາຊິກທີ່ໃກ້ຊິດຂອງຄອບຄົວຂອງບຸກຄົນສະເພາະທີ່ໄດ້ກ່າວເຖິງໃນຂໍ້ (ກ) ຫຼື (ຄ);

(ຈ) ພາກສ່ວນທີ່ກ່ຽວຂ້ອງແມ່ນຜູ້ທີ່ຄວບຄຸມສາຂາ, ມີສ່ວນຮ່ວມໃນການຄວບຄຸມ ຫຼື ມີອິດທິພົນທີ່ສຳຄັນ, ຫຼື ມີສິດອຳນາດໃນການອອກສຽງໃນຕໍ່ທະນາຄານ ທີ່ດຳເນີນທຸລະກິດ, ໂດຍທາງກົງ ຫຼື ທາງອ້ອມ, ທຸກໆພາກສ່ວນທີ່ໄດ້ກ່າວເຖິງໃນຂໍ້ (ຄ) ຫຼື (ງ); ຫຼື

(ສ) ພາກສ່ວນທີ່ກ່ຽວຂ້ອງ ເປັນຜົນປະໂຫຍດຫຼັງອອກການ ຂອງພະນັກງານໃນສາຂາ ຫຼື ທະນາຄານອື່ນໆທີ່ມີສາຍພົວພັນກັບສາຂາ.

**21.** ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ຍອດເຫຼືອກັບພາກສ່ວນທີ່ກ່ຽວຂ້ອງ ນະວັນທີ 31 ທັນວາ 2020 ແລະ ວັນທີ 31 ທັນວາ 2019 ແມ່ນມີດັ່ງນີ້:

| | *31/12/2020*<br>*ໜີ້ຕ້ອງຮັບ/*<br>*(ໜີ້ຕ້ອງສົ່ງ)*<br>*ພັນກີບ* | *31/12/2019*<br>*ໜີ້ຕ້ອງຮັບ/*<br>*(ໜີ້ຕ້ອງສົ່ງ)*<br>*ພັນກີບ* |
|---|---|---|
| **ເງິນຝາກລະຫວ່າງສາຂາກັບທະນາຄານ ເມແບັງ - ສຳນັກງານໃຫຍ່** | | |
| ບັນຊີຂອງທະນາຄານທີ່ເປີດກັບສາຂາ | (135,704,472) | (118,115,300) |
| ເງິນຝາກມີກຳນົດ | 70,467,200 | 88,600,000 |
| **ເງິນຝາກລະຫວ່າງສາຂາກັບທະນາຄານ ເມແບັງ -ສາຂານິວຢອກ** | | |
| ບັນຊີທີ່ສາຂາເປີດກັບທະນາຄານ | 136,675,194 | 50,266,618 |
| **ເງິນຝາກລະຫວ່າງສາຂາກັບທະນາຄານ ເມແບັງ - ສາຂາໜອງຄ້ອງ** | | |
| ບັນຊີຂອງທະນາຄານທີ່ເປີດກັບສາຂາ | - | 30,927,067 |
| ເງິນຝາກມີກຳນົດ | - | - |

ການເຄື່ອນໄຫວທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງພາຍໃນປີມີດັ່ງນີ້:

| | *2020*<br>*ພັນກີບ* | *2019*<br>*ພັນກີບ* |
|---|---|---|
| ລາຍຮັບດອກເບ້ຍສຳລັບເງິນຝາກມີກຳນົດຢູ່ທະນາຄານ ເມແບັງ – ສາຂາ ໜອງຄ້ອງ | - | (2,203) |
| ລາຍຮັບດອກເບ້ຍສຳລັບເງິນຝາກມີກຳນົດຈາກທະນາຄານ ເມແບັງສຳນັກງານໃຫຍ່ | (943,582) | (1,187,257) |
| | **(943,582)** | **(1,189,460)** |

*ການເຄື່ອນໄຫວກັບຄະນະບໍລິຫານຫຼັກຂອງສາຂາ*

ຄ່າຕອບແທນຂອງສະມາຊິກຄະນະບໍລິຫານມີດັ່ງນີ້:

| | *31/12/2020*<br>*ພັນກີບ* | *31/12/2019*<br>*ພັນກີບ* |
|---|---|---|
| ເງິນເດືອນ | 1,473,511 | 1,239,734 |
| ໂບນັສ ແລະ ຜົນປະໂຫຍດອື່ນໆ | - | 1,814,378 |
| | **1,473,511** | **3,054,112** |

## 22. ເຫດການທີ່ເກີດຂຶ້ນພາຍຫຼັງວັນທີຂອງໃບລາຍງານຖານະການເງິນ

ນະມື້ທີ່ເຮັດບົດລາຍງານບໍ່ໄດ້ມີເຫດການໃດທີ່ສຳຄັນເກີດຂຶ້ນພາຍຫຼັງວັນທີຂອງບົດລາຍງານຖານະການເງິນ ທີ່ຮຽກຮ້ອງໃຫ້ມີການດັດແກ້ ແລະ ເປີດເຜີນໃນເອກະສານລາຍງານການເງິນຂອງສາຂາ.

ພາຍຫຼັງວັນທີຂອງບົດລາຍງານຖານະການເງິນສະບັບນີ້, ທະນາຄານ ເມແບັງ ສາຂາໜອງດ້ວງໄດ້ສຳເລັດການໂອນຊັບສິນ ແລະ ໜີ້ສິນທັງໝົດພ້ອມດ້ວຍສິດ ແລະ ພັນທະໃຫ້ແກ່ສາຂາ ອີງຕາມແຜນການຂອງທະນາຄານ ເມແບັງ ສາຂາໜອງດ້ວງທີ່ໄດ້ຮັບການອະນຸມັດຈາກ ທຫລ.

ກະກຽມໂດຍ:

ທ່ານ ສິດທິພົນ ສີສຸດາຈັນ
ຫົວໜ້າພະແນກການເງິນ

ອະນຸມັດໂດຍ:

ທ່ານ Tan Tee Huat
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

29 ເມສາ 2020